ລູກາ 4: 16 - 21 "ໂຮງທຳມະເທດສະໜາ" ຄືໂຮງທີ່ພວກຢິວເຄີຍປະຊຸມທຸກວັນສະບາໂຕເພື່ອລວມນະມັດສະການ. ນອກນັ້ນເປັນບ່ອນລວມປະຊຸມ ໃນດ້ານສັງຄົມ ຊ້ຳເປັນໂຮງຮຽນສຳລັບເດັກນ້ອຍຂອງຄົນຢິວ."ສະບາໂຕ" ເປັນຊື່ວັນຖ້ວນເຈັດຊຶ່ງຊາວຢິວຖືເປັນວັນສັກສິດ ວັນນີ້ພັກການງານທຸກຢ່າງ.


ເຈົ້າໝິ່ນປະໝາດພຣະເຈົ້າ!
ເຈົ້າມັນເປັນພຽງ ລູກຊ່າງໄມ້!
ໃຈເຢັນໆ ພວກເຮົາ ຈະໄປດຽວນີ້ແລ້ວ
ເອົາຫີນຂວ້າງມັນໃຫ້ ຕາຍ! ມັນບັງອາດອ້າງ ຕົວເປັນພຣະເມຊີອາ!
ພຣະເຢຊູ ສະເດັດໄປເຖິງເມືອງກາເປນາອຸມ ຊຶ່ງຢູ່ ເທິງຝັ່ງທະເລແລະເປັນບ້ານເກີດຂອງສາວົກບາງ ຄົນຂອງພຣະອົງ ແລະພຣະອົງກັບສາວົກສະເດັດ ເຂົ້າໄປໃນ ໂຮງທຳມະເທດສະໜາຢ່າງເຄີຍ
ແລ້ວຜູ້ປະກາດພຣະທຳກໍກ່າວວ່າ ພຣະເມຊີອາ ຈະຊົງເປັນແສງສະຫວ່າງແກ່ຄົນຕ່າງຊາດຕ່າງສາ ສະໜາ ແລະພວກເຂົາເຫຼົ່ານີ້ຈະສັດທາເຊື່ອຖື ວາງໃຈໃນພຣະອົງ. ຄວາມສຸກເປັນຂອງບຸກຄົນ ທີ່ມີໃຈບໍລິສຸດສະອາດ ເພາະພວກເຂົາຈະໄດ້ເຫັນ ພຣະເຈົ້າ. ພຣະອົງຈະບໍ່ຊົງປະຖິ້ມ ຜູ້ທີ່ເຂົ້າມາຫາ ພຣະອົງເລີຍ ບໍ່ວ່າຈະເປັນຄົນຢິວຫຼືຄົນຕ່າງຊາດ
ເຮົາຮູ້ຈັກທ່ານ! ທ່ານຄືອົງ ບໍລິສຸດຂອງພຣະເຈົ້າ!
ອົງບໍລິສຸດຂອງພຣະເຈົ້າ! ຢ່າມາຫຍຸ້ງກັບພວກເຮົາ!
ລາວຖືກຜີເຂົ້າ ເອົາຕົວອອກໄປສາ
ທ່ານຈະມາທຳລາຍເຮົາກ່ອນ ເວລາໄດ້ແນວໃດ? ຢ່າມາຫຍຸ້ງ ກັບເຮົາ ເຮົາກັບທ່ານບໍ່ມີຫຍັງ ກ່ຽວຂ້ອງກັນ!
ໃຜປ່ອຍໃຫ້ລາວເຂົ້າມາ? ລະວັງເດີ! ຄົນນີ້ອັນຕະລາຍ!
ວິນຍານຊົ່ວເອີຍ! ເຮົາຂໍສັ່ງເຈົ້າ ໃຫ້ອອກຈາກຕົວຊາຍຄົນນີ້. ແລະ ເຊົາທໍລະມານລາວດຽວນີ້!

ລູກາ 4:28-35




ມາຣະໂກ 1:25-28; ລູກາ 4:35-38


ປ້າເອີຍ ລຸກຂຶ້ນເຖີດ
ຄວາມເຈັບໄຂ້ອອກໄປແລ້ວ
ແມ່ລຸກຂຶ້ນໄດ້ແລ້ວ! ຊີງປິ່ນປົວຮັກສາແມ່ ຫາຍດີແລ້ວ!
ນາງລຸກຂຶ້ນຈາກຕຽງມາບົວລະບັດ ພຣະເຢຊູ ແລະບັນດາສາວົກ
ຂ່າວການຊີງປິ່ນປົວພະຍາດ ແຜ່ອອກໄປ. ຜູ້ຄົນຫຼວງຫຼາຍ ພາຄົນເຈັບມາຫາພຣະເຢຊູ
ອາຈານເອີຍ ພໍ່ຂ້ອຍຖືກໄມ້ຊຸງ ຕົກທັບຫຼັງຫັກ ຍ່າງບໍ່ໄດ້ມາຕັ້ງແຕ່ ຍັງໜຸ່ມ. ຖ້າຊີງປິ່ນປົວຮັກສາເພິ່ນ ໄດ້ ຂໍຊີງຊ່ວຍແດ່ທ້ອນ!
ລຸກຂຶ້ນແລ້ວຍ່າງດຽວນີ້
ຂອບພຣະຄຸນພຣະເຈົ້າ!
ຂ້ອຍຍ່າງໄດ້ແລ້ວ! ອັດສະຈັນແທ້ໆ!
ອາຈານເອີຍ ລູກສາວຂ້ອຍຕາບອດ ຕັ້ງແຕ່ເກີດ. ຂໍຈົ່ງຊ່ວຍນາງແດ່ທ້ອນ




ມັດທາຍ 5:43-44, 6:12, 5:8, 38:42, 5:21-22; ມາຣະໂກ 1:34; ລູກາ 4:39-41




ມັດທາຍ 5:27-28, 7:13-14, 28-29, 23:27-28; ໂຢຮັນ 5:18-19, 23, 29-30, 14:6




ຈົດເຊັ່ນບັນຊີ 21:5-9; ໂຢຮັນ 3:1-14

"ຟາຣີຊາຍ" ຊື່ຄົນກຸ່ມໜຶ່ງຂອງສາສະໜາຢິວທີ່ຖືເຄັ່ງຄັດຕາມພຣະບັນຍັດຂອງໂມເຊ


ທ່ານກຳລັງບອກວ່າ ການບັງເກີດໃໝ່ເທົ່ານັ້ນຈຶ່ງຈະຊ່ວຍໃຫ້ບາບໝົດໄປໄດ້ ແລະຕົວທ່ານເອງກຳລັງຈະຖືກແຂວນໄວ້ເທິງເສົາ ເພື່ອໃຫ້ຄົນທັງຫຼາຍໄດ້ຮັບຄວາມພົ້ນ
ເມື່ອໃດທີ່ການບັງເກີດໃໝ່ນີ້ຈະເກີດຂຶ້ນ?
ຫຼັງຈາກທີ່ເຮົາຖືກຍົກຊູຂຶ້ນເພື່ອໃຫ້ທຸກຄົນໄດ້ເບິ່ງ.
ແມ່ນແລ້ວ ມະນຸດທຸກຄົນໃນຍຸກນີ້ກໍກຳລັງຈະຕາຍ ເພາະຮອຍແຜຂອງບາບ. ແຕ່ຄາວນີ້ເຮົາເປັນຜູ້ທີ່ຈະຖືກຍົກຊູຂຶ້ນໃຫ້ທຸກຄົນເບິ່ງ. ຄົນທີ່ຖືກບາບກັດກິນຈະພົບຄວາມພົ້ນໄດ້ຖ້າເຂົາເຊື່ອວາງໃຈໃນຕົວເຮົາ
ເພາະວ່າພຣະເຈົ້າຊົງຮັກໂລກ ຈົນໄດ້ຊົງປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດຕະຫຼອດໄປເປັນນິດ. ຄົນໃດທີ່ເຊື່ອວາງໃຈໃນເຮົາຈະໄດ້ຮັບຊີວິດນິລັນດອນສ່ວນຄົນທີ່ບໍ່ເຊື່ອໃນເຮົາກໍຖືກພິພາກສາຕັດສິນແລ້ວຈະຮັບໂທດ

ໂຢຮັນ 3:14-18


ລະຫວ່າງທາງຈາກເຢຣູຊາເລັມໄປຄາລີເລ ເປັນທີ່ຢູ່ຂອງພວກສະມາເຣຍ ບໍ່ມີຊາວຢິວຄົນໃດຢາກຕິດຕໍ່ຄົບຫາກັບຊາວສະມາເຣຍ ແມ່ນແຕ່ເດີນທາງຜ່ານເມືອງຂອງພວກເຂົາກໍບໍ່ມີໃຜເຮັດ ທັງນີ້ເພາະຄົນຢິວເຊື່ອວ່າຊາວສະມາເຣຍເປັນຄົນມີມົນທິນໃນດ້ານຈິດວິນຍານ. ແຕ່ວັນໜຶ່ງພຣະເຢຊູຊົງເຮັດໃຫ້ພວກສິດຕົກໃຈເມື່ອຊົງກ່າວວ່າ:
ພາກັນໄປ ສະມາເຣຍ
ອາຈານເອີຍ ຄົນພວກນັ້ນບໍ່ບໍລິສຸດ ໂງ່ຈ້າ ຍາກຈົນ ບໍ່ມີຄຸນນະທຳເດີ.
ເຮົາຈະໄປສະມາເຣຍ ເພາະພຣະບິດາຊົງປາຖະໜາໃຫ້ເຮົາໄປ
ປະມານທ່ຽງວັນ ພວກເຂົາກໍໄປເຖິງບໍ່ນ້ຳນອກເມືອງ
ພວກທ່ານໄປຫາຊື້ອາຫານໃນເມືອງ ສ່ວນເຮົາຈະລໍຖ້າຢູ່ຂ້າງບໍ່ນ້ຳນີ້
ພຣະອົງຈະຢູ່ບ່ອນນີ້ຕາມລຳພັງຫຼື?
ແມ່ນ ເຮົາຕ້ອງເຮັດວຽກທີ່ພຣະບິດາຊົງມອບໝາຍ
ພຣະເຢຊູຊົງອິດເມື່ອຍ ຊົງຫິວເຂົ້າແລະຊົງຫິວນ້ຳ. ເຖິງແມ່ນວ່າເປັນຕອນທ່ຽງແລະຮ້ອນຫຼາຍ ຍັງມີຍິງຊາວສະມາເຣຍຄົນໜຶ່ງຍ່າງມາຕັກນ້ຳ

ໂຢຮັນ 4:1-8


N ຂໍໂທດນາງ ຂ້ອຍ ຂໍດື່ມນ້ຳໄດ້ບໍ?
O ໂອ ເປັນຫຍັງທ່ານຜູ້ເປັນຊາວຢິວຈຶ່ງໄດ້ຂໍດື່ມນ້ຳຈາກຜູ້ຍິງສະມາເຣຍຢ່າງຂ້ອຍ? ຂ້ອຍຄິດວ່າຄົນຢິວຢ່າງທ່ານບໍ່ຢາກພົບປະກັບພວກເຮົາເສຍອີກ
P ຖ້າເຈົ້າຮູ້ຈັກຂອງປະທານທີ່ພຣະເຈົ້າຈະມອບໃຫ້ ແລະຮູ້ວ່າເຮົາເປັນໃຜ ເຈົ້າກໍຄົງຈະຂໍຈາກເຮົາ ແລະເຮົາກໍຈະໃຫ້ນ້ຳແຫ່ງຊີວິດແກ່ເຈົ້າ
ທ່ານຫຼືຈະໃຫ້ນ້ຳເຮົາ? ທ່ານບໍ່ມີຫຍັງຕັກນ້ຳ ແລ້ວບໍ່ນ້ຳກໍເລິກຂະໜາດນີ້. ທ່ານຈະໄປເອົານ້ຳແຫ່ງຊີວິດມາຈາກໃສ?
ເຈົ້າດື່ມນ້ຳຈາກບໍ່ນີ້ເຈົ້າຈະຢາກກິນອີກ ແຕ່ນ້ຳທີ່ເຮົາໃຫ້ເຈົ້າດື່ມຈະພຸ່ງຢູ່ພາຍຈິດໃຈເຈົ້າຕະຫຼອດນິລັນດອນ
ຖ້າຈັ່ງຊັ້ນ ຂໍເອົານ້ຳແຫ່ງຊີວິດນັ້ນໃຫ້ຂ້ອຍແດ່. ຂ້ອຍບໍ່ຢາກຫິວນ້ຳ ແລະບໍ່ຢາກມາຕັກນ້ຳອີກ
ໄປຕາມຜົວເຈົ້າມາ ແລ້ວເຮົາຈະບອກເຈົ້າເລື່ອງນ້ຳນີ້
ຂ້ອຍບໍ່ມີຜົວ
ເຈົ້າມີຜົວມາ 5 ຄົນແລ້ວ ຊາຍທີ່ເຈົ້າຢູ່ນຳຕອນນີ້ກໍບໍ່ແມ່ນຜົວເຈົ້າ
ທ່ານຕ້ອງເປັນຜູ້ປະກາດພຣະທຳແນ່ນອນ ທ່ານລ່ວງຮູ້ບາບທີ່ຂ້ອຍປົກປິດໄວ້
ພວກທ່ານຊາວຢິວນະມັດສະການພຣະເຈົ້າໃນກຸງເຢຣູຊາເລັມ ແຕ່ບັນພະບຸລຸດຂອງພວກເຮົານະມັດສະການພຣະເຈົ້າທີ່ພູເຂົາ. ຕົກລົງເຮົາຄວນໄປນະມັດສະການພຣະເຈົ້າທີ່ໃດກັນແທ້?
ພຣະເຈົ້າຊົງເປັນພຣະວິນຍານ. ພຣະອົງບໍ່ຕ້ອງການການນະມັດສະການໃນວິຫານທີ່ສ້າງຂຶ້ນດ້ວຍມືມະນຸດ ພຣະອົງຊົງສະແຫວງຫາຜູ້ເຊື່ອຄວາມຈິງ ແລະນະມັດສະການພຣະອົງດ້ວຍຈິດວິນຍານ
ພວກເຮົາຮູ້ວ່າພຣະເມຊີອາກຳລັງສະເດັດມາ ແລະເມື່ອມາເຖິງພຣະອົງຈະຊົງສັ່ງສອນພວກເຮົາເຖິງຄວາມຈິງຕ່າງໆ
ເຈົ້າກຳລັງເວົ້າຢູ່ກັບພຣະເມຊີອາອົງນັ້ນ
ຂ້ອຍຕ້ອງໄປບອກເພື່ອນໆໃຫ້ຮູ້
ພຣະເຢຊູ ປະທັບສັ່ງສອນພຣະຄຳຂອງພຣະເຈົ້າ ຢູ່ທີ່ສະມາເຣຍ 2 ວັນ

ໂຢຮັນ 4:7-29, 40




ມັດທາຍ 14:15, 6:1-7, 6:19-21













ມັດທາຍ 14:19-21; ລູກາ 9:16-17




ມັດທາຍ 14:20-23




ມັດທາຍ 14:24-29




ມັດທາຍ 14:29-30




ມັດທາຍ 14:31-33, 4:38-41


ຕໍ່ມາ...
ຊ່ວງງານລ້ຽງສະຫຼອງນີ້ຄົນແໜ້ນແທ້ໆ. ມີຄົນມາຈາກທົ່ວປະເທດ ບາງຄົນມາຈາກດິນແດນຫ່າງໄກ ຢ່າງໂຣມ ຫຼືເອຢິບ
ໄປທີ່ສະນ້ຳກັນເທາະ
ເທົ່າທີ່ຈື່ໄດ້ ລາວຢູ່ບ່ອນນີ້ມາດົນແລ້ວ
ເຈົ້າຢາກຫາຍດີ ເປັນປົກກະຕິຫຼືບໍ?
ບໍ່ມີໃຜຊ່ວຍຂ້ອຍ
ລຸກຂຶ້ນ ແລ້ວຍົກບ່ອນນອນເຈົ້າຍ່າງໄປ.
ທ່ານຄືພຣະເຢຊູແມ່ນບໍ? ຂ້ອຍໄດ້ຍິນເລື່ອງອັດສະຈັນທີ່ທ່ານເຮັດມາແລ້ວ
ຫຼອກຄົນພິການໄດ້ແນວໃດ ໜ້າສົງສານຈະຕາຍ ຍ່າງບໍ່ໄດ້ມາ 38 ປີແລ້ວ.
ວັນນີ້ເປັນວັນບໍລິສຸດເປັນວັນສະບາໂຕ ບໍ່ແມ່ນເລື່ອງທີ່ຈະມາກໍ່ຄວາມວຸ້ນວາຍໃນວັນສະຫງົບໆ ຢ່າງນີ້

ໂຢຮັນ 5:1-8




ລູກາ 14:5-6; ໂຢຮັນ 5:9-17


ລາວບອກວ່າລາວເປັນລູກ ພຣະເຈົ້າ. ລາວບັງອາດຕີ ຕົວສະເໝີກັບພຣະເຈົ້າ
ຈັບລາວໄວ້! ແລ້ວເອົາຫີນ ຂວ້າງໃຫ້ຕາຍ!
ຂ້າເສຍເລີຍ!
ທ່ານຈະຂ້າຄົນທີ່ປິ່ນປົວຮັກສາ ຄົນເຈັບໃນວັນສະບາໂຕຫຼື?
ລາວເວົ້າດູໝິ່ນ ພຣະບັນຍັດ
ພຣະອົງບໍ່ໄດ້ກ່າວດູ ໝິ່ນພຣະບັນຍັດເລີຍ
ຈົ່ງຟັງສິ່ງທີ່ພຣະອົງ ຈະກ່າວເສຍກ່ອນ
ຟັງທາງນີ້ ທ່ານປະຫຼາດໃຈ ພຽງເພາະເຫັນເຮົາເຮັດການອັດສະຈັນ ເທື່ອນີ້ພຽງເທື່ອດຽວ ແຕ່ທ່ານຈະໄດ້ເຫັນ ການອັດສະຈັນທີ່ຍິ່ງໃຫຍ່ກວ່ານີ້ອີກ. ພຣະບິດາ ຂອງເຮົາຊົງເຮັດໃຫ້ຄົນຕາຍແລ້ວຟື້ນຂຶ້ນມາໄດ້ ສັນໃດ ພຣະອົງຊົງໃຫ້ເຮົາມີສິດທິອຳນາດເຊັ່ນ ດຽວກັບພຣະອົງສັນນັ້ນ. ພຣະບິດາຊົງໃຫ້ເຮົາ ມີສິດທິອຳນາດເໜືອໂລກນີ້ ທຽບເທົ່າ ພຣະອົງຢ່າງສົມບູນ
ການບໍ່ໃຫ້ກຽດເຮົາກໍຄືການ ບໍ່ຖວາຍພຣະກຽດແດ່ພຣະເຈົ້າ. ເຮົາບອກຄວາມຈິງແກ່ພວກທ່ານວ່າ ຜູ້ໃດຟັງເຮົາ ຜູ້ນັ້ນກໍຟັງພຣະອົງ ຜູ້ຊົງໃຊ້ເຮົາມາ ແລະເຂົາຈະ ໄດ້ຮັບຊີວິດນິລັນດອນ
ທ່ານຈະໃຫ້ຊີວິດນິລັນ ດອນໄດ້ແນວໃດຫຼື?
ເມື່ອເຖິງເວລາຜູ້ທີ່ຕາຍໄປແລ້ວຈະໄດ້ຍິນສຽງຂອງເຮົາ ແລ້ວພວກເຂົາຈະອອກມາຈາກອຸບໂມງຝັງສົບຂອງພວກເຂົາ. ບັນດາຜູ້ທີ່ໄດ້ປະພຶດດີກໍຟື້ນຂຶ້ນສູ່ຊີວິດນິລັນດອນ ບັນດາຜູ້ທີ່ ປະພຶດຊົ່ວກໍຈະຟື້ນຂຶ້ນມາແລະຖືກຖິ້ມລົງໄປໃນບຶງໄຟແຫ່ງ ຄວາມຈິບຫາຍຕະຫຼອດໄປເປັນນິດ
ລາວໝິ່ນປະໝາດ ພຣະເຈົ້າ! ບໍ່ມີມະນຸດຄົນໃດ ເຮັດໃຫ້ຄົນຕາຍຟື້ນໄດ້! ມີແຕ່ ພຣະເຈົ້າຜູ້ດຽວທີ່ປະທານ ຊີວິດນິລັນດອນໄດ້

ໂຢຮັນ 5:18-29


ພວກທ່ານບໍ່ເຊື່ອເຮົາ ແຕ່ໂຢຮັນເຄີຍທຳນວາຍເລື່ອງ ການບັງເກີດມາຂອງເຮົາ. ພຣະຄຳພີກໍເຊັ່ນດຽວກັນ. ລອງໄປຫາອ່ານເບິ່ງເຖີດ ໃນນັ້ນມີຄຳຂອງຜູ້ປະກາດ ພຣະທຳຫຼວງຫຼາຍ ທີ່ເປັນພະຍານເຖິງຕົວເຮົາ
ຢ່າຄິດວ່າເຮົາຈະຟ້ອງພຣະເຈົ້າວ່າພວກທ່ານ ເຮັດຜິດ. ພຣະບັນຍັດຂອງໂມເຊ ທີ່ພວກທ່ານ ບໍ່ເອົາໃຈໃສ່ປະພຶດຕາມຕ່າງຫາກ ທີ່ຈະເປັນ ພະຍານຢືນຢັນຄວາມຜິດຂອງພວກທ່ານ
ຄົນນີ້ເດ່ທີ່ພວກເຂົາພະຍາຍາມຂ້າ ຂະໜາດນີ້ແລ້ວ ຍັງເວົ້າແບບບໍ່ໄວ້ໜ້າໃຜ ແລ້ວບໍ່ມີໃຜກ້າເຮັດຫຍັງດ້ວຍ ຫຼື ວ່າພວກຝ່າຍປົກຄອງຮູ້ວ່າທ່ານຜູ້ນີ້ເປັນພຣະຄຣິດ ທີ່ເປັນ ພຣະເມຊີອາຂອງຊາວອິດສະຣາເອນອີງນັ້ນແທ້ໆ
ພວກນັກທຳສອນວ່າ ພວກເຮົາຈະບໍ່ຮູ້ວ່າພຣະເມ ຊີອາ ສະເດັດມາຈາກໃສ ແຕ່ພວກເຮົາຮູ້ວ່າຊາຍຄົນນີ້ ເປັນລູກຊາຍຂອງຊ່າງໄມ້ ທີ່ແຄວັນຄາລີເລ
ເຈົ້າເວົ້າວ່າ ເຈົ້າຮູ້ວ່າເຮົາເປັນໃຜ ແລະຮູ້ວ່າເຮົາມາຈາກທີ່ໃດ ເຮົາມາໂລກນີ້ບໍ່ແມ່ນ ເພາະມາເອງ ແຕ່ພຣະບິດາຊົງສົ່ງເຮົາມາ. ແຕ່ເຈົ້າ ບໍ່ຮູ້ຈັກພຣະບິດາຂອງເຮົາ ເຮົາຕ່າງຫາກທີ່ຮູ້ຈັກ ພຣະອົງ ແລະພຣະອົງຊົງໃຊ້ເຮົາມາຫາເຈົ້າ
ລາວໄດ້ຍິນຂ້ອຍເວົ້າ ໄດ້ແນວໃດ?
ຊົງລ່ວງຮູ້ທຸກຢ່າງ
ພຣະອົງຄືພຣະເມຊີອາ ຜູ້ສະເດັດມາຕາມທີ່ມີຜູ້ ທຳນວາຍໄວ້
ຮູ້ໄດ້ຂະໜາດນີ້ຕ້ອງເປັນພຣະ ເມຊີອາ ເທົ່ານັ້ນແມ່ນບໍ່?
ເທື່ອນີ້ຕ້ອງຖືກຈັບແທ້ໆ
ໄປຈັບຕົວຄົນທີ່ໝິ່ນປະໝາດ ພຣະເຈົ້າມາດຽວນີ້!
ຜູ້ຄົນພາກັນເຊື່ອຟັງຄຳ ເວົ້າຂອງລາວ. ຕ້ອງ ຈັດການໃຫ້ງຽບໄດ້ແລ້ວ




ມັດທາຍ 5:6, 9; ໂຢຮັນ 4:14; 7:45-52


ຕົວະຫຼອກຊາວ ບ້ານກໍໄດ້ລະຕິ
ແຕ່ລາວມີຄຳຕອບ ໃຫ້ທຸກເລື່ອງເລີຍ
ເຮົາຈະຫານັກກົດໝາຍທີ່ ສະຫຼາດໆ ລໍ້ລາວໃຫ້ຈົນ ມູມຄຳເວົ້າຂອງຕົນເອງ
ແມ່ນແລ້ວ ເຮົາຮູ້ຈັກນັກ ກົດໝາຍຄົນໜຶ່ງທີ່ ສະຫຼາດແລະບໍ່ປານີໃຜ
ນັກກົດໝາຍຄົນນັ້ນຈຶ່ງ ມາປະລອງກັບພຣະເຢຊູ
ອາຈານ ຂ້າພະເຈົ້າ ຕ້ອງເຮັດຢ່າງໃດເພື່ອຈະ ໄດ້ຊີວິດນິລັນດອນ?
ພຣະບັນຍັດຂຽນ ໄວ້ວ່າຢ່າງໃດລະ?
ຂຽນວ່າ "ຈົ່ງຮັກອົງພຣະຜູ້ເປັນເຈົ້າ ຂອງເຈົ້າດ້ວຍສຸດຈິດສຸດໃຈຂອງເຈົ້າ ດ້ວຍ ສຸດກຳລັງແລະສິ້ນສຸດຄວາມຄິດຂອງເຈົ້າ ແລະຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ."
ທ່ານຕອບຖືກແລ້ວ ພຣະບັນຍັດ ຈະສົມບູນໄດ້ຕ້ອງມີຄວາມຮັກ. ຖ້າທ່ານ ຮັກເພື່ອນບ້ານເໝືອນຮັກຕົນເອງທ່ານ ກໍເຮັດໃຫ້ພຣະເຈົ້າຊົງພໍພຣະໄທ
ຈິງຢູ່ ວ່າແຕ່ເຮົາຈະນັບໃຜເປັນເພື່ອນບ້ານແດ່ ລະ? ຄົງບໍ່ແມ່ນທຸກຄົນຕີ? ແມ່ນແຕ່ພວກ ໂຣມັນທີ່ບໍ່ເຊື່ອພຣະເຈົ້າກໍບໍ່ແມ່ນ ແມ່ນບໍ່?
N ລອງຟັງເລື່ອງນີ້...
O ຊາຍຄົນໜຶ່ງເດີນທາງຈາກກຸງເຢຣູ ຊາເລັມຈະໄປເມືອງເຢຣີໂກ. ແລ້ວຖືກ ໂຈນປຸ້ນເອົາເສື້ອຜ້າສົມບັດທຸກຢ່າງໄປ ໝົດ. ປ່ອຍໃຫ້ລາວນອນລໍຄວາມຕາຍຢູ່
P ປະໂລຫິດຄົນໜຶ່ງຍ່າງ ຜ່ານມາເຫັນ ກໍອ້ອມໄປອີກ ທາງໜຶ່ງບໍ່ໄດ້ຢຸດຊ່ວຍ ແຕ່ຢ່າງໃດ

ລູກາ 10:25-31


ຄົນເລວີ ຊຶ່ງເປັນຄົນທີ່ໄດ້ຮັບເລືອກໃຫ້ເຮັດໜ້າທີ່ໃນພຣະວິຫານ ກໍຄືກັນ ຍ່າງຜ່ານມາຢຸດເບິ່ງຊາຍຄົນນັ້ນທີ່ບາດເຈັບ ແຕ່ກໍບໍ່ໄດ້ຊ່ວຍເຫຼືອຄືກັນ
ມີປະໂຫຍດຫຍັງຖ້າຈະເວົ້າວ່າ "ຮັກ" ແຕ່ບໍ່ສະແດງອອກມາເປັນການກະທຳດ້ວຍໃຈຮັກ ແລະຖ້າທ່ານບໍ່ຮັກເພື່ອນບ້ານກໍບໍ່ຮັກພຣະເຈົ້າ
ແລ້ວກໍມີຊາວສະມາເຣຍຄົນໜຶ່ງຜ່ານມາ. ຄົນພວກນີ້ເປັນທີ່ກຽດຊັງຂອງຊາວຢິວ ແລະດູໝິ່ນວ່າເປັນຄົນບໍ່ບໍລິສຸດ. ແຕ່ເມື່ອລາວເຫັນຄົນບາດເຈັບບໍ່ມີເສື້ອຜ້ານອນຢູ່ກາງຖະໜົນ ລາວເຂົ້າໄປຊ່ວຍໂດຍບໍ່ຄິດວ່າເປັນຊາວຢິວຫຼືເປັນໃຜ.
ດ້ວຍຄວາມເມດຕາຊາວສະມາເຣຍຢຸດລົງໄປຊ່ວຍ
ຊາວສະມາເຣຍ ລ້າງແລະເອົາຜ້າພັນບາດແຜໃຫ້ຜູ້ນັ້ນ. ລາວສະແດງຄວາມຮັກດ້ວຍການກະທຳບໍ່ແມ່ນພຽງແຕ່ຄຳເວົ້າ
ແລ້ວຊາວສະມາເຣຍກໍພາຄົນເຈັບຂຶ້ນຫຼັງລາຂອງຕົນໄປສົ່ງໄວ້ທີ່ໂຮງແຮມແຫ່ງໜຶ່ງ ເພື່ອໃຫ້ຄົນເຈັບໄດ້ພັກປິ່ນປົວຮັກສາຕົວ
ສະບາຍໃຈເຖີດ ທ່ານປອດໄພແລ້ວ. ຈັກໜ້ອຍກໍຈະໄດ້ນອນສະບາຍໆ
ເຮົາຈ່າຍເງິນຄ່າທີ່ພັກແລະຄ່າອາຫານຂອງທ່ານລ່ວງໜ້າສອງອາທິດກ່ອນ. ຖ້າຫາກບໍ່ພໍ ເຮົາຈະຈ່າຍໃຫ້ເມື່ອຜ່ານມາທາງນີ້ອີກ

ລູກາ 10:32-35




ມັດທາຍ 5:43-44; ລູກາ 10:36-37


ໃນທີ່ແຫ່ງໜຶ່ງ ມີບ້ານຄົນຂີ້ເຮື້ອນ
ບໍ່ໄດ້ກິນຫຍັງມາ ຫຼາຍວັນແລ້ວ
ເຈົ້າຕ້ອງຕາຍແທ້ໆ ຖ້າເຈົ້າບໍ່ຮຽນຮູ້ກິນໜູຫຼືແມງສາບ. ຢ່າງໜ້ອຍກໍພໍຍືດຊີວິດໄປໄດ້ແດ່
ໃຫ້ຂ້ອຍຕາຍຍັງດີກວ່າ. ເບິ່ງສະພາບຂ້ອຍຕິ ແຕ່ກ່ອນ ເຄີຍລ້ຳລວຍ ມີຄົນນັບໜ້າຖືຕາ ດຽວນີ້ເປັນແນວໃດລະ?
ບໍ່ມີໃຜນັບຖືເຈົ້າອີກແລ້ວ ລະ. ເຈົ້າມັນກໍເປັນພຽງ ໝາຫິວເນົ່າຂີ້ເຮື້ອນນີ້ເອງ
ທຳອິດຂ້ອຍກໍຫວັງວ່າຈະດີຂຶ້ນ ແລ້ວ ຈະໄດ້ກັບໄປຫາລູກຫາເມຍ. ແຕ່ນີ້ກໍ 10 ປີ ມາແລ້ວ. ຂ້ອຍຍັງບໍ່ເຫັນມີໃຜຫາຍດີ ແລ້ວ ກັບເຂົ້າໄປຢູ່ກັບຄົນປົກກະຕິໄດ້ເລີຍ
ເອົ້າ ຢຸດສົມເພດຕົນເອງ ໄດ້ແລ້ວ. ເວົ້າໄປກໍບໍ່ມີໃຜ ເວດທະນາ. ແມ່ນແຕ່ພຣະເຈົ້າ ກໍເຖີດ. ໄປກັນເທາະ ເພື່ອຈະມີ ໃຜໃຫ້ຫຍັງກິນແດ່
ຄິດເບິ່ງຕິ ຕອນທີ່ຫາກໍເປັນ ເມຍຂ້ອຍ ຈະພາລູກໆມາຫາ ຍືນຢູ່ໄກໆ ເວົ້າລົມກັບຂ້ອຍ. ແຕ່ຍິ່ງດົນກໍຍິ່ງຫາຍໜ້າໄປ. ປານນີ້ລູກໆຄົງໃຫຍ່ກັນ ໝົດແລ້ວ. ເຖິງເຫັນກໍຄົງຈື່ຂ້ອຍບໍ່ໄດ້. ໂທ່ເອີຍ ບໍ່ຮູ້ຈະຢູ່ໄປເຮັດຫຍັງ?
ວັນນີ້ໄປເຖິງຖະໜົນໃຫຍ່ ເລີຍດີກວ່າ ເພື່ອຈະພົບ ຄົນໃຈດີມີເມດຕາ
ໄປເປັນກຸ່ມໜ້າຈະປອດ ໄພກວ່າ ຍ່າງໄປລວມກັບ ພວກນັ້ນເລີຍດີບໍ່?


ເບິ່ງນັ້ນແມ ມີຄົນ ຍ່າງຢູ່ເທິງຖະໜົນ.
ລະວັງ! ພວກນັກເລງນັ້ນ ມາອີກແລ້ວ!
ອອກໄປ! ພວກ ຂີ້ທູດກຸດຖັງ! ໄປຕາຍສາໄປ!
ພວກໝອນກັດກິນ! ພວກຖືກສາບແຊ່ງ!
ໜີ! ໜີໄວ!
ລະວັງ! ລະວັງ! ພວກເຮົາມີມົນທິນ!
ພວກຄົນພະຍາດຂີ້ທູດ. ຢ່າໃຫ້ເຂົ້າມາໃກ້. ຈັກໜ້ອຍຈະຕິດພະຍາດ.
ເມດຕາພວກເຮົາດ້ວຍເຖີດ. ໃຫ້ອາຫານເປັນທານແກ່ ພວກເຮົາຈັກໜ້ອຍໜຶ່ງເຖີດ.
ໃຫ້ໄປເຖີດ ຈະໄດ້ ໄປພົ້ນໆເສຍທີ.
ຖອຍໄປຫ່າງໆ ພວກເຈົ້າເປັນມົນທິນ.
ຖອຍໄປອີກ. ຈັກ ໜ້ອຍຈະເອົາອາຫານ ວາງໄວ້ໃຫ້ເທິງພື້ນ.
ຢ່າໆ ຢ່າຟ້າວເຂົ້າ ມາ. ໃຫ້ຂ້ອຍອອກ ຈາກບ່ອນນີ້ກ່ອນ.


ເຂົ້າຈີ່!
ອາຫານ!
ແບ່ງໃຫ້ຂ້ອຍແດ່!
ມຶງຢ່າເອົາໄປ
ຄົນດຽວຕິ!
ເຮີ້ຍ! ນີ້ຂອງຂ້ອຍ!
ບັກບ້າເອີຍ!
ໂອ ພຣະເຈົ້າ!
ເຂົ້າຈີ່! ເຂົ້າຈີ່!
ມີຄົນຫຼວງຫຼາຍ
ຍ່າງມານັ້ນ.
ລະວັງຕົວແດ່ເດີ.
ຄົນຫຼວງຫຼາຍ.
ເປັນຜູ້ຊາຍ
ທັງໝົດ.


ນັ້ນພຣະເຢຊູ ໄທນາຊາເຣັດເດ່! ຂ້ອຍເຄີຍເຫັນທ່ານຕອນທີ່ຂ້ອຍຍັງບໍ່ເປັນພະຍາດ. ທ່ານປິ່ນປົວຮັກສາຄົນເຈັບໄດ້ເດີ! ທ່ານບອກໄປທົ່ວວ່າພຣະເຈົ້າສົ່ງທ່ານມາ
ແລ້ວທ່ານກັບພຣະເຈົ້າເປັນໜຶ່ງດຽວກັນ. ຂ້ອຍເຫັນທ່ານປິ່ນປົວຮັກສາຄົນຕາບອດກັບຄົນງ່ອຍມາແລ້ວດ້ວຍ.
ພຣະເຢຊູ! ຊ່ວຍພວກເຮົາແດ່!
ພຣະອາຈານ ນັ້ນພວກຄົນພະຍາດຂີ້ທູດ.
ຢ່າໃຫ້ເຂົ້າໃກ້.
ມີຫຍັງຈະໃຫ້ເຮົາເຮັດລະ?
ເມດຕາປິ່ນປົວຮັກສາພວກເຮົາແດ່.
ຖ້າຊົງໂຜດ ຂໍຊົງຊໍາລະຂ້າພະອົງໃຫ້ສະອາດດວ້ຍ.
ພຣະອົງບໍ່ຄວນຈັບຕ້ອງຕົວຂ້ອຍ.
ບໍ່ເປັນຫຍັງດອກ. ຈົ່ງກັບໄປໃຫ້ປະໂລຫິດເບິ່ງຕົວເຈົ້າທີ່ພຣະວິຫານ ໃຫ້ພວກເຂົາໄດ້ເຫັນວ່າເຈົ້າຫາຍດີສະອາດແລ້ວ ຈະໄດ້ອະນຸຍາດໃຫ້ກັບໄປຫາລູກຫາເມຍໄດ້.
N ພຣະອົງກ່າວວ່າ ເຮົາຫາຍສະອາດດີແລ້ວ.
O ມີຫວັງຖືກໄລ່ອອກມາກ່ອນໄປເຖິງພຣະວິຫານ.
P ຂ້ອຍຈະໄປເຮັດຕາມທີ່ພຣະອົງບອກ.
Q ຂ້ອຍໄປນໍາໄປກັນເທາະ.

ລູກາ 17:11-14


พระเยຊູ ກ່າວວ່າ ພວກເຮົາຫາຍດີແລ້ວ.
ຂ້ອຍຮູ້ສຶກດີຂຶ້ນ.
ເຮົາປ່ຽນໄປ!
ຜິວຂ້ອຍ ຫາຍດີແລ້ວ!
ພຣະເຍຊູຊົງປິ່ນປົວຮັກສາພວກເຮົາ ແລ້ວ! ເຈົ້າຫາຍດີເໝືອນເດີມແລ້ວ!
ເຈົ້າກໍບໍ່ໜ້າ ລັງກຽດແລ້ວ!
ຂ້ອຍຕ້ອງກັບໄປ ຫາເມຍຂ້ອຍ!
ຂອບພຣະຄຸນພຣະອົງພຣະບຸດຂອງພຣະເຈົ້າຈອມ ກະສັດແຫ່ງອິດສະຣາເອນ. ພຣະອົງຊົງເຮັດໃຫ້ ຂ້ານ້ອຍໄດ້ຊີວິດຄືນມາ. ພຣະເຈົ້າຜູ້ຊົງເມດຕາສູງ
ທັງໝົດສິບຄົນທີ່ຫາຍສະອາດດີບໍ່ແມ່ນຫຼື? ເປັນຫຍັງມີຄົນກັບມາຂອບໃຈພຽງຄົນ ດຽວ? ຊ້ຳບໍ່ໜຳຍັງເປັນຄົນສະມາເຣຍ ແທນທີ່ຈະເປັນຄົນຢິວ.

ລູກາ 17:14-19




ມັດທາຍ 7:13-14, 22-23; ພຣະນິມິດ 14:11




ລູກາ 16:19-22; ເຮັບເຣີ 9:27


ຂະນະທີ່ຂະບວນສົບຂອງເສດຖີເຄື່ອນອອກຈາກເຮືອນພວກ ເຂົາເຫັນວ່າ ລາຊາໂລ ຂໍທານຜູ້ນັ້ນຕາຍໄປແລ້ວຄືກັນ.
ຂໍທານເຖົ້າລາຊາໂລນີ້ເອງ ຄົງຈະຕາຍເມື່ອຄືນນີ້ຄືກັນ ຕາຍຢ່າງສະຫງົບເສຍດ້ວຍ.
ສົບຂອງລາຊາໂລ ຖືກນຳຂຶ້ນກວຽນລາກໄປ ໂຍນເຜົາທີ່ດຽວກັບຊາກສັດຕ່າງໆ. ບໍ່ມີພິທີສົບ ບໍ່ມີຄົນຮ້ອງໄຫ້ອາໄລອາວອນໃດໆທັງສິ້ນ.
ແຕ່ເທວະດາພາກັນມາອູ້ມ ເອົາລາຊາໂລໄປສູ່ສະຫວັນ.
ລາຊາໂລ ພີ່ນ້ອງຂອງເຮົາ ຍິນດີ ຕ້ອນຮັບກັບບ້ານບ່ອນທີ່ທ່ານຈະບໍ່ຕ້ອງ ຫິວ ບໍ່ຕ້ອງເຈັບປວດອີກຕໍ່ໄປ. ມາຕິ ເຮົາຕຽມສຳລັບທ່ານໄວ້ໃຫ້ພ້ອມແລ້ວ.
ໂອໂຮ! ມາໄດ້ໄວແທ້! ບໍ່ເຄີຍຄິດເລີຍວ່າຕາຍ ແລ້ວຈະດີຢ່າງນີ້!
ສົບຂອງເສດຖີໜຸ່ມຖືກນຳໄປຝັງໃນສຸສານທີ່ງົດງາມທີ່ສຸດ. ຄົນທີ່ຊື່ນຊົມຄວາມລ້ຳລວຍຂອງລາວພາກັນມາຮ່ວມພິທີ ແລະເບິ່ງວ່າຕົນຈະໄດ້ຮັບຫຍັງເປັນມໍລະດົກແດ່.
ທ່ານເປັນຄົນດີ. ເຖິງວ່າບາງເທື່ອອາດ ຈະເຂັ້ມງວດ ແຕ່ທ່ານກໍເຮັດເພາະຮັກ. ເຮົາຈະຈົດຈຳທ່ານໃນຖານະຜູ້ເຮັດຄຸນ ປະໂຫຍດຕໍ່ຊາດແລະຊື່ສັດຕໍ່ໜ້າທີ່.
ທ່ານຈາກໄປເພື່ອຮັບ ບຳເໜັດຊີວິດ. ຂໍໃຫ້ຈິດວິນ ຍານທ່ານໄດ້ພັກຜ່ອນໃນ ຄວາມສະຫງົບຕະຫຼອດໄປ.
ແຕ່ເມື່ອເສດຖີຕາຍ ລາວພົບວ່າຕົນເອງ ດຳດິ່ງລົງໄປເຖິງກົ້ນບຶ້ງຂອງນະຮົກ.

ລູກາ 16:22


ຊ່ວຍແດ່! ໂອພຣະເຈົ້າ! ໃຜກໍໄດ້ຊ່ວຍຂ້ອຍແດ່! ຂ້ອຍຢູ່ບ່ອນນີ້ໃນຂຸມໄຟຮ້ອນເຫຼືອເກີນ!


N
ອັບຣາຮາມ ພໍ່ເອີຍ ເມດຕາຂ້ອຍແດ່ ຂ້ອຍເຫັນລາຊາໂລຢູ່ທີ່ນັ້ນ ໃຫ້ລາວເອົານິ້ວມືຈຸ່ມນໍ້າມາແຕະປາຍລີ້ນຂ້ອຍໃຫ້ເຢັນລົງຈັກໜ້ອຍໜຶ່ງເຖີດ. ທໍລະມານເຫຼືອເກີນໃນແປວໄຟນີ້.
O
ລູກເອີຍ ຖ້າຊ່ວຍໄດ້ເຮົາຄົງຊ່ວຍເຈົ້າແລ້ວ. ແຕ່ລະຫວ່າງເຮົາກັບເຈົ້າມີເຫວໃຫຍ່ທີ່ມີບຶງໄຟຢູ່ເບື້ອງລຸ່ມກັ້ນກາງຢູ່. ເຮົາຂ້າມໄປຊ່ວຍເຈົ້າບໍ່ໄດ້ ເຈົ້າເອງກໍຂ້າມມາບໍ່ໄດ້ຄືກັນ.
P
ຖ້າຈັ່ງຊັ້ນໂຜດເມດຕາໃຫ້ລາຊາໂລ ກັບໄປບອກພໍ່ແລະພີ່ນ້ອງຂອງຂ້ອຍທັງ 5 ຄົນເຖິງສິ່ງທີ່ເກີດກັບຂ້ອຍ ເພື່ອພວກເຂົາຈະບໍ່ຕ້ອງຕົກຢູ່ໃນສະພາບດຽວກັນກັບຂ້ອຍທີ່ທຸກທໍລະມານເຫຼືອທົນຢ່າງນີ້.
Q
ພວກເຂົາມີພຣະບັນຍັດຂອງໂມເຊ ກັບຜູ້ປະກາດພຣະທຳສອນໄວ້ແລ້ວ. ໃຫ້ພວກເຂົາເຊື່ອຟັງທ່ານເຫຼົ່ານັ້ນເຖີດ.
R
ພຽງແຕ່ເທົ່ານັ້ນບໍ່ພໍດອກ. ຖ້າພວກເຂົາເຫັນອັດສະຈັນທີ່ໃຜຈັກຄົນເປັນຂຶ້ນຈາກຄວາມຕາຍ ພວກເຂົາຈະກັບໃຈເຊື່ອຟັງພຣະຄຳແນ່ນອນ.
S
ຖ້າພວກເຂົາບໍ່ເຊື່ອຟັງພຣະຄຳ ແມ່ນມີຄົນໜຶ່ງຈະເປັນຂຶ້ນຈາກຄວາມຕາຍ ພວກເຂົາກໍຈະຍັງບໍ່ເຊື່ອ. ຊ້າໄປແລ້ວລະທ່ານ. ພວກເຂົາຕ້ອງຕັດສິນໃຈເລືອກເອງແລ້ວ. ເສຍໃຈນຳເດີ. ເຮົາຊ່ວຍຫຍັງບໍ່ໄດ້ແທ້ໆ.

ລູກາ 16:22-31




ອົບພະຍົບ 20:14; ລູກາ 8:2; 1 ໂຢຮັນ 1:9




ລູກາ 8:2, 11:24-26




ປັນຍາຈານ 12:14; ມັດທາຍ 23:25, 6:19-21, 25, 28-30, 12:36; ລູກາ 15:1-3


ຊາຍຄົນໜຶ່ງມີລູກຊາຍສອງຄົນ. ລູກຄົນນ້ອຍເປັນຄົນຂີ້ດື້ ຢາກໃຊ້ຊີວິດຕາມໃຈຕົນເອງ.
ທ່າທາງຄື ຈະມ່ວນເນາະ.
N ລາວກໍເລີຍບອກພໍ່ວ່າ ລາວຢາກໄດ້ມໍລະດົກຂອງລາວ.
O ພໍ່ເອີຍ ຖ້າພໍ່ບໍ່ວ່າຫຍັງ ລູກຂໍຊັບສິນທີ່ນາສ່ວນທີ່ເປັນຂອງລູກເລີຍໄດ້ບໍ? ລູກຢາກຈະໄປໃຊ້ຊີວິດຢູ່ໃນເມືອງໃຫຍ່ໆ.
P ແຕ່ລູກກໍຮູ້ວ່າທຸກຢ່າງທີ່ພໍ່ເຮັດກໍເຮັດເພື່ອລູກໆ. ພໍ່ເອງຄົງຢູ່ໄດ້ບໍ່ດົນ. ອີກຈັກໜ້ອຍສົມບັດທັງໝົດກໍຕ້ອງຕົກເປັນຂອງເຈົ້າກັບອ້າຍ. ເຈົ້າຢູ່ໄດ້ສະບາຍໆໄປຕະຫຼອດຊີວິດ. ເຮົາມີແບ້ ແກະ ງົວ ຄວາຍຫຼວງຫຼາຍ ນາເຂົ້າກໍໄດ້ຜົນເຫຼືອກິນທຸກປີ. ລູກຈ້າງຄົນງານກໍຫຼວງຫາຍ ແລ້ວຍັງຈະ...
Q ແຕ່ລູກຢາກອອກໄປເບິ່ງໂລກພາຍນອກແດ່! ບໍ່ຢາກຢູ່ແຕ່ໃນໄຮ່ໃນນາ ເຮັດວຽກເໝືອນຂ້າທາດຂອງພໍ່ໄປຈົນຕະຫຼອດຊີວິດ. ລູກຍັງໜຸ່ມຢາກເຮັດຫຍັງມ່ວນໆ ໃຫ້ຊີວິດແດ່ ຄືກັບພວກໝູ່...
R ພວກໝູ່ ທີ່ບໍ່ເຮັດວຽກຫຍັງວັນໆ ຄິດແຕ່ວ່າມ້າຕົວໃດແລ່ນໄວ ເຫຼົ້າແບບໃດແຊບ ຜູ້ຍິງຄົນໃດໜ້າສົນໃຈ...
S ພໍ່ເຄີຍເຮັດຫຍັງມ່ວນໆ ໃນຊີວິດພໍ່ແດ່ບໍ່? ພໍ່ເອົາແຕ່ກົ້ມໜ້າກົ້ມຕາຢູ່ໃນໄຮ່ໃນສວນບ່ອນເກົ່ານີ້. ແບ່ງຊັບສິນຂອງລູກໃຫ້ລູກເຖີດພໍ່. ລູກຢາກໄປໃຊ້ຊີວິດຂອງລູກເອງໃນເມືອງ.
T ໃຫ້ລາວໄປເຖີດ. ເຖິງລາວບໍ່ຢູ່ ເຮົາກໍຄົງບໍ່ລຳບາກຫຍັງ. ອາດຈະດີຂຶ້ນດ້ວຍຊ້ຳ. ເວລາຢູ່ກໍບໍ່ໄດ້ຊ່ວຍການງານຫຍັງຢູ່ແລ້ວ.
ເມື່ອໄດ້ຮັບມໍລະດົກສ່ວນທີ່ເປັນຂອງຕົນແລ້ວ ລູກຄົນນ້ອຍກໍລົງເຮືອໄປຍັງເມືອງໃຫຍ່ ເພື່ອຫາຄວາມສຸກໃສ່ຕົນເອງຢ່າງທີ່ຄິດໄວ້.
ນີ້ລະຊີວິດແທ້ໆ! ບໍ່ຕ້ອງຄອຍຖ້າຮັບຟັງຄຳສັ່ງໃຜຕໍ່ໃຜ.

ລູກາ 15:11-1 3


ລູກຊາຍຄົນນ້ອຍ...
ໂອໂຮ ໃຫຍ່ໂຕມະໂຫ ລານກວ່າທີ່ຄິດໄວ້ເສຍອີກ! ທັງຄົນທັງຕຶກອາຄານບ້ານ ຊ່ອງ ໜ້າຕື່ນເຕັ້ນໄປໝົດ!
ໄປຫາຫ້ອງພັກ ດີໆຢູ່ດີກວ່າ.
ອືມ! ບ່ອນນີ້ດີ ສົມຄວນ ຂ້ອຍ ເອົາເລີຍ.
ຖ້າຂາດເຫຼືອຫຍັງກໍບອກມາ ໄດ້ເລີຍ. ພວກເຮົາເປີດ ບໍລິການທັງກາງເວັນກາງຄືນ.
ສະບາຍແທ້ໆ. ມື້ອື່ນ ຄ່ອຍອອກໄປທ່ຽວເບິ່ງ ສິ່ງຕ່າງໆກໍແລ້ວກັນ.

ລູກາ 15:13


ນີ້ ເບິ່ງຊາຍໜຸ່ມນັ້ນແມ ທາກໍ່ ມາຈາກບ້ານນອກຕິ ຍັງເຫັນໜ້າ ບໍ່ແຈ້ງ ສິງໄສຈະງາມດີ.
ເປັນແນວໃດເພື່ອນ ຢາກຫາ ຫຍັງມ່ວນໆເຮັດບໍ່? ໄປແຖ ໜວດແຖເຄົາ ຫາເສື້ອຜ້າ ດີໆໃສ່ກ່ອນດີບໍ່.
ເບິ່ງໝໍ່ນັ້ນແມ ໃສ່ເສື້ອ ຜ້າພວກນີ້ແລ້ວເບິ່ງ ງາມດີຄືກັນເນາະ.
ດີໃຈທີ່ມາກິນເຂົ້າ ນຳກັນໄດ້.
ຕັດຜົມມະຍຸມະຍະ ອອກແລ້ວເບິ່ງງາມ ຂຶ້ນເນາະ.
ດື່ມໃຫ້ກັບເພື່ອນໃໝ່ ແດ່ ຂໍໃຫ້ມີແຕ່ຄວາມສຸກ ສະໜຸກສະໜານເດີ.
ແລ້ວກໍມີ ຄວາມຮັກດ້ວຍ.
ນ້ອງໆ ເອົາເຫຼົ້າອະງຸ່ນ ໃຫ້ເພື່ອນອ້າຍອີກ.

ລູກາ 15:13


ໄປທີ່ຫ້ອງພັກກັນເຖີດ ພຽງເຮົາສອງຄົນເດີ.
ແລ້ວເດັກໜຸ່ມຜູ້ຈາກເຮືອນມາຕາມລຳພັງ ກໍໃຊ້ຊີວິດຫຼູຫຼາຟູມເຟືອຍຢູ່ຊົ່ວເວລາໜຶ່ງ. ໃນຍາມທີ່ລາວມີເງິນມີຄຳ ກໍມີເພື່ອນຝູງຫ້ອມລ້ອມຫຼວງຫຼາຍ.
ຈົນກະທັ້ງເງິນຄຳທີ່ມີຢູ່ລຸດນ້ອຍລົງ ແລະໝົດໄປ. ແຕ່ລາວຍັງຄົງມີເພື່ອນຝູງລ້ຳລວຍຢູ່ອີກຫຼາຍຄົນ.
ໝາຍຄວາມວ່າແນວໃດ? ເງິນໝົດແລ້ວ? ໃສວ່າລວຍ?
ກໍຢູ່ບ່ອນນີ້ຕ້ອງໃຊ້ເງິນຫຼາຍ. ແລ້ວເມື່ອອາທິດກ່ອນຂ້ອຍເສຍພະນັນແຂ່ງມ້າໝົດຕົວ. ຂ້ອຍວ່າຂ້ອຍເອົາເຕັ່ງໜຶ່ງແລ້ວ ກໍເລີຍຫວັງວ່າຈະ.....
ນີ້ກຳລັງບອກວ່າໝົດຕົວແລ້ວລະຕິ? ຢ່າງນີ້ຂ້ອຍກໍອົດໄດ້ຊຸດນັ້ນທີ່ບອກວ່າຈະຊື້ໃຫ້ແມ່ນບໍ່?
ໂທ່ ແຕ່ພໍ່ເຈົ້າອາດຈະໃຫ້ຂ້ອຍຊ່ວຍເຮັດວຽກເປັນຜູ້ຈັດການເບິ່ງແຍງທຸລະກິດຂອງທ່ານກໍໄດ້.
ວຽກງານຊັ້ນບໍ?
=ບໍ່ຢາກເຊື່ອເລີຍວ່າຕ້ອງມາເອົາເຂົ້າລ້ຽງໝູສົກກະປົກໂສໂຄກພວກນີ້ ຄິດວ່າພວກນັ້ນເປັນເພື່ອນເສຍອີກ
=ຕອນນີ້ແມ່ນແຕ່ໜ້າກໍຍັງບໍ່ຍອມເບິ່ງ. ໃຫ້ເຮົາຫາວຽກໄດ້ດີກວ່ານີ້ເສຍກ່ອນເທາະ ຈະກັບໄປຢືນຫົວແຖວຄືເກົ່າແທ້ໆ.
ອູ໊ດ=ອູ໊ດ ຈັບ=ຈັບ

ລູກາ 15:13-15


ກູບໍ່ສົນວ່າມຶງຈະຮູບງາມຫຼັກແຫຼມ ພຽງໃດ ອອກໄປລ້ຽງໝູດຽວນີ້! ບໍ່ດັ່ງນັ້ນມຶງຖືກໄລ່ອອກແທ້! ກູຫາ ຄົນໃໝ່ກໍໄດ້! ໄປດຽວນີ້ເລີຍ!
ເຈົ້າ ເຈົ້າ ຂໍໂທດ ຈະໄປດຽວນີ້ແຫຼະ.
ຄ່າຈ້າງງານນີ້ເກືອບ ຈະບໍ່ພໍກິນ. ປານນີ້ພວກທີ່ ບອກວ່າເປັນເພື່ອນເຮົາຄົງ ກິນດີຢູ່ດີກັນ.
ຊີວິດເຮົາຕົກຕໍ່າຂະໜາດນີ້ແລ້ວ ຫຼື? ທັງໜາວ ທັງຫິວ ແລ້ວກໍອິດເມື່ອຍຈົນ ເກືອບຈະຍາດອາຫານໝູກິນ. ຄົນໃຊ້ເຮືອນພໍ່ຍັງຢູ່ດີ ກິນດີມີເຫຼືອ. ຖ້າພຽງແຕ່... ແຕ່ຈະກັບໄປເບິ່ງໜ້າພໍ່ ແນວໃດໄດ້? ເຮົາເຮັດກັບພໍ່ໄວ້ຫຼາຍ ເປັນໃຜ ກໍຄົງຈະຊັງນໍ້າໜ້າເຮົາຫຼາຍ.
ເປັນຫຍັງເຮົາຈຶ່ງເຮັດສິ່ງໂງ່ໆ ຢ່າງນັ້ນນໍ. ກັບ ໄປຂໍເປັນຄົນໃຊ້ພໍ່ຈະດີບໍ່? ຕອນນີ້ຢູ່ເຮືອນກໍບໍ່ ມີອັນໃດເຫຼືອເປັນຂອງເຮົາແລ້ວ. ພຽງຂໍເປັນ ຄົນໃຊ້ກໍຄືຊິໄດ້. ພໍ່ກັບອ້າຍຈະຍອມຮັບບໍ່ນໍ?
ກັບບ້ານ ດີກວ່າ.
ບ້າໄປແລ້ວ! ບໍ່ມີເງິນ ຢ່າງນີ້ຕ້ອງຍ່າງຕັ້ງ 1000 ກວ່າກິໂລແມັດ.
ຫຼັງຈາກເດີນທາງມາ ຫຼາຍອາທິດ ລາວກໍມາ ຢຸດບ່ອນໃກ້ໆເຮືອນ.
ຈະເຖິງເຮືອນຢູ່ແລ້ວ ແຕ່ເຮົາມີສິດຫຍັງ ທີ່ຈະກັບມາຂໍໃຫ້ພໍ່ເຫັນໃຈເຮົາ? ເອົາເຖີດ ເຮົາພຽງຢາກບອກພໍ່ວ່າ ເຮົາຮູ້ວ່າເຮົາຜິດໄປແລ້ວ. ເຮັດກໍາຊົ່ວເປັນບາບບໍ່ເໝາະທີ່ຈະເປັນລູກຂອງພໍ່ ອີກຕໍ່ໄປ. ຂໍໃຫ້ພໍ່ຮັບເຮົາເປັນພຽງຄົນໃຊ້ກໍໄດ້. ພໍ່ ຈະວ່າແນວໃດນໍ?

ລູກາ 15:16-19


ເບິ່ງນັ້ນຕິ ເຫັນຜູ້ຊາຍທີ່ກຳລັງຍ່າງມານັ້ນບໍ່? ຕາຂ້ອຍມົວຫຼາຍແລ້ວ ບໍ່ເໝືອນກ່ອນ ແຕ່ຄົນນັ້ນທ່າທາງຍ່າງເໝືອນລູກຊາຍຄົນນ້ອຍຂອງຂ້ອຍທີ່ຫາຍໄປດົນນານແລ້ວ!
ແມ່ນແທ້! ເບິ່ງແກ່ລົງ ແລ້ວກໍຈ່ອຍຫຼາຍ ແຕ່ແມ່ນລູກຂອງທ່ານແນ່ນອນ
ລູກພໍ່!
ລູກພໍ່. ລູກພໍ່! ເຈົ້າກັບບ້ານແລ້ວ!
ພໍ່ເອີຍ ລູກຄົງຊົ່ວຮ້າຍຫຼາຍໃນສາຍຕາຂອງພໍ່
... ແລ້ວລູກ ກໍບໍ່ມີຄ່າພໍທີ່ຈະເປັນລູກຂອງພໍ່.
ພໍ່ຄິດວ່າເຈົ້າຕາຍໄປແລ້ວ ແຕ່ຕອນນີ້ເຈົ້າມີຊີວິດກັບມາ. ໄປອາບນ້ຳຊຳລະຕົວກ່ອນເລີຍລູກ.
ລູກຈະກັບເຂົ້າເຮືອນສະພາບນີ້ບໍ່ໄດ້. ພໍ່ຈະໃຫ້ຄົນໃຊ້ເອົາເສື້ອຄຸມແລະເກີບທີ່ດີທີ່ສຸດມາໃຫ້ ແຫວນຫາຍໄປໃສແລ້ວ? ບໍ່ເປັນຫຍັງ ພໍ່ຈະຫາໃຫ້ໃໝ່. ລູກຊາຍພໍ່ທີ່ຫາຍໄປ ກັບຄືນມາແລ້ວ!

ລູກາ 15:20-22


ໄປຂ້າລູກງົວໂຕຕຸ້ຍພີ ຕຽມຈັດງານລ້ຽງ. ເຊີນແຂກມາໃຫ້ພ້ອມ. ເຮົາຈະສະຫຼອງໃຫ້ເຕັມທີ່ ມື້ນີ້ເປັນມື້ແຫ່ງຄວາມຍິນດີຂອງເຮົາ.
ດີໃຈເຫຼືອເກີນທີ່ທ່ານທັງຫຼາຍມາຮ່ວມຍິນດີກັບຂ້ອຍໃນໂອກາດອັນດີນີ້. ລູກຊາຍຂ້ອຍອາດຈະຍັງບໍ່ຄ່ອຍແຂງແຮງປານໃດ ເພາະຫາກໍຜ່ານຄວາມຍາກລຳບາກມາ ແຕ່ໄດ້ຮັບປະທານອາຫານດີໆ ຢ່າງນີ້ ບໍ່ດົນຄົງດີຂຶ້ນ. ວັນນີ້ເປັນວັນດີທີ່ສຸດໃນຊີວິດຂ້ອຍເລີຍລະ!
ຂະນະທີ່ພໍ່ຈັດງານລ້ຽງໃຫ້ລູກຄົນນ້ອຍ ອ້າຍຄົນໃຫຍ່ຫາກໍເດີນທາງກັບມາເຖິງເຮືອນ ຫຼັງຈາກບໍ່ຢູ່ມາຫຼາຍວັນ.
ສຽງດົນຕີ ເຕັ້ນລຳຫຍັງກັນຫຼື?
ນ້ອງຊາຍທ່ານກັບບ້ານແລ້ວ ຕອນທີ່ມາເຖິງເບິ່ງບໍ່ໄດ້ເລີຍ ທັງບໍ່ສະບາຍ ທັງຈ່ອຍຜອມ ແຕ່ພໍ່ທ່ານດີໃຈຫຼາຍ ທ່ານຮີບເຂົ້າໄປດີກວ່າ.
ຂ້ອຍຈະບໍ່ຮ່ວມຫຍັງດ້ວຍທັງນັ້ນ. ໜ້າອາຍຈະຕາຍ. ຊີວິດມັນມົ່ວຢູ່ແຕ່ເລື່ອງບາບເລື່ອງຊົ່ວ.
ຄົນໃຊ້ເຂົ້າໄປບອກຜູ້ເປັນພໍ່ວ່າລູກຊາຍຄົນໃຫຍ່ເວົ້າຢ່າງໃດ ຜູ້ເປັນພໍ່ຈຶ່ງອອກມາຫາລາວ.
ພໍ່ຕາມຫານ້ອງມາດົນນານແລ້ວ ຄິດວ່າຈະສູນເສຍລາວຕະຫຼອດໄປ. ພໍ່ເກືອບຈະຍອມເສຍແລ້ວ ແຕ່ແລ້ວນ້ອງກໍຍ່າງກັບມາ! ພຣະເຈົ້າຊົງແສນດີແມ່ນບໍ່? ຊົງອວຍພອນພວກເຮົາໄດ້ຂະໜາດນີ້ເຊື່ອບໍ່ລະ?
ລູກບໍ່ຢາກເຊື່ອເລີຍວ່າພໍ່ຈະດີໃຈໜັກໜາກັບຄົນບາບຢ່າງນັ້ນ. ລູກບໍ່ມີວັນຮ່ວມທາງກັບຄົນບາບຢ່າງມັນດອກ.
ເລື່ອງນີ້ດີແທ້ໆ ແຕ່ວ່າທ່ານກຳລັງຈະບອກວ່າເຮົາຄືກັບອ້າຍຄົນໃຫຍ່ແມ່ນຫຼືບໍ?
ໃຜມີຫູ ກໍຈົ່ງຟັງເອົາ.

ລູກາ 15:23-32




ມັດທາຍ 20:17-20; ໂຢຮັນ 11:1-15


ພຣະເຢຊູ ກັບ ບັນດາສາວົກຍັງຢູ່ ຂ້າງນອກເຮືອນ.
ບໍ່ແມ່ນ!
ໄປທູນພຣະອົງ ໃຫ້ຊົງລໍຖ້າເຮົາຢູ່ບ່ອນນັ້ນ. ຂ້າງໃນນີ້ອັນຕະລາຍເກີນໄປສຳລັບພຣະອົງ ເພາະພວກຟາຣີຊາຍກັບປະໂລຫິດຢູ່ບ່ອນນີ້ດ້ວຍ ຄົນພວກນີ້ຕາມຂ້າພຣະອົງຢູ່.
ອ້າຍຂອງເຈົ້າຈະ ຟື້ນຄືນມາອີກ.
ພຣະອົງເຈົ້າຂ້າ ຖ້າພຣະອົງຢູ່ບ່ອນນີ້ ອ້າຍຂ້າພະອົງຄົງຍັງບໍ່ຕາຍ. ແຕ່ເຖິງວ່າລາວຕາຍໄປແລ້ວຂ້າພະອົງຮູ້ວ່າ ພຣະເຈົ້າຈະປະທານທຸກຢ່າງທີ່ພຣະອົງທູນຂໍ.
ຂ້າພະອົງຮູ້ແລ້ວວ່າ ລາວຈະຟື້ນຄືນມາອີກໃນ ວັນສຸດທ້າຍຂອງໂລກ.
ເຮົາເປັນເຫດໃຫ້ ຄົນທັງປວງເປັນ ຄືນມາແລະມີຊີວິດ.
ປຄົນທີ່ວາງໃຈໃນເຮົາ ເຖິງວ່າຕາຍໄປແລ້ວກໍຈະຍັງມີຊີວິດອີກ ແລະທຸກຄົນທີ່ມີຊີວິດແລະວາງໃຈໃນເຮົາຈະບໍ່ຕາຍເລີຍ. ເຈົ້າເຊື່ອຢ່າງນີ້ຫຼືບໍ່?
ເຊື່ອເຈົ້າຂ້າ. ຂ້າພະອົງເຊື່ອວ່າພຣະອົງເປັນພຣະເມຊີອາ ພຣະບຸດພຣະເຈົ້າ ທີ່ສະເດັດມາໃນໂລກ.
ເມື່ອທູນພຣະເຢຊູ ດັ່ງນີ້ແລ້ວ ມາທາ ກໍໃຫ້ຄົນໃຊ້ໄປຕາມມາລີອາ ມາ.
ຕາມມາລີອາ ໄປໄວ ນາງຈະໄປຮ້ອງໄຫ້ທີ່ອຸບໂມງແລ້ວ.

ໂຢຮັນ 11:17-31


ພຣະອົງເຈົ້າຂ້າ ຖ້າ ພຣະອົງຢູ່ບ່ອນນີ້ ອ້າຍ ຂ້ານ້ອຍຄົງບໍ່ຕາຍ.
ເຈົ້າເອົາສົບລາວ ໄປໄວ້ທີ່ໃດ?
ພວກເຮົາຄິດ ຮອດອ້າຍຫຼາຍ.
ເບິ່ງແມວ່າພຣະເຢຊູ ຊົງ ຮັກລາຊາໂລພຽງໃດ.
ພຣະອົງເຮັດໃຫ້ຄົນ ຕາບອດເບິ່ງເຫັນ ແລ້ວຈະ ເຮັດໃຫ້ເພື່ອນຂອງພຣະ ອົງມີຊີວິດຢູ່ ບໍ່ໄດ້ຫຼື?
ກິ້ງຫີນ ອອກໄປຕີ.
ພຣະອົງເຈົ້າຂ້າ ລາວຕາຍ ມາ 4 ວັນແລ້ວ ປານນີ້ສົບ ຄົງຈະເໝັນແລ້ວ.
ເຮົາບອກເຈົ້າແລ້ວບໍ່ແມ່ນ ຫຼືວ່າ ຖ້າເຈົ້າເຊື່ອເຮົາເຈົ້າຈະ ເຫັນຄວາມຍິ່ງໃຫຍ່ຂອງພຣະ ເຈົ້າ? ເອົາຫີນອອກໄປຕີ!
ຂ້າແດ່ພຣະບິດາ ຂອບ ພຣະຄຸນທີ່ຊົງຟັງຂ້າພຣະອົງ ຂ້າ ພຣະອົງບໍ່ໄດ້ອະທິຖານເພື່ອຕົນເອງ ເພາະຮູ້ວ່າພຣະອົງຊົງຟັງຂ້າພຣະ ອົງຢູ່ສະເໝີ ແຕ່ຂ້າພະອົງອະທິ ຖານເພື່ອໃຫ້ຄົນທັງຫຼາຍທີ່ລໍຄອຍຖ້າ ຢູ່ນີ້ໄດ້ເຊື່ອວ່າພຣະອົງຊົງໃຊ້ຂ້າພະອົງ ມາ. ຂໍສະແດງລິດທານຸພາບ ຂອງພຣະອົງບັດນີ້ເຖີດ.

ໂຢຮັນ 11:32-42


ລາຊາໂລ ອອກມາເຖີດ!
ໄປກັນໃຫຍ່ ແລ້ວເດີນີ້.
ແມ່ນລະ ຊອກ ຫາເລື່ອງໃສ່ ຕົວແທ້ໆ.
ເປັນແນວໃດລະ ສິບ ເນີ່າແລ້ວແມ່ນບໍ່?
ພໍຄົນເຫັນວ່າລາວເປັນຈອມ ຫຼອກລວງ ເຮົາກໍຈະຈັບຕົວ ໄປປະຫານໄດ້ ບໍ່ຍາກແລ້ວ.
ອັນໃດກັນນີ້? ບໍ່ໜ້າເຊື່ອ!
ເປັນໄປບໍ່ໄດ້!
ພຣະສີລີຈົ່ງມີ ແດ່ພຣະເຈົ້າ!
ພຣະອົງຊົງເຮັດສຳເລັດ ແລ້ວ! ມາລີອາ ພຣະອົງ ຊົງເຮັດສຳເລັດແລ້ວ!
ລາວຟື້ນຄືນແລ້ວ! ຕາຍໄປຕັ້ງ 4 ວັນ ແຕ່ຟື້ນຄືນແລ້ວ!

ໂຢຮັນ 11:43-44


ຫຼັງຈາກຕາຍໄປແລ້ວ 4 ວັນ ລາຊາໂລ ກໍອອກມາຈາກອຸບໂມງຝັງສົບ ມີຜ້າພັນມືພັນຕີນເໝືອນສົບທົ່ວໄປ.
ແກ້ຜ້າທີ່ພັນລາວອອກ ແລ້ວປ່ອຍລາວເຖີດ.
ບໍ່ມີໃຜເຮັດຢ່າງນີ້ໄດ້ ນອກຈາກພຣະເຈົ້າ.
ເອະອະໂວຍວາຍກັນເຮັດຫຍັງ? ເອົາຜ້າພັນສົບພວກນີ້ອອກໃຫ້ຂ້ອຍແດ່ຕີ.
ທ່ານຕາຍມາ 4 ວັນແລ້ວ.
ພຣະອາຈານ. ດີໃຈທີ່ສຸດທີ່ໄດ້ເຫັນໜ້າທ່ານອີກ. ທ່ານເອງລະຕີ ທີ່ເຮັດໃຫ້ຂ້ອຍກັບມາທີ່ນີ້ໄດ້ອີກ.
ໂອ ລາຊາໂລ ພວກເຮົາຄິດເຖິງເຈົ້າຫຼາຍເຫຼືອເກີນ.
ຫິວຂະໜາດເລີຍ! ໃຫ້ພວກຮັບຈ້າງຮ້ອງໄຫ້ກັບໄດ້ແລ້ວ ໄປຫາອັນໃດກິນກັນເທາະ.
ຂໍພຣະເຈົ້າອວຍພອນທ່ານ! ໂອ ພຣະເຈົ້າ! ພຣະເຈົ້າຂອງເຮົາ!
ທ່ານວ່າເຮົາຕາຝາດໄປຫຼືບໍ່? ສ້າງເລື່ອງຢ່າງນີ້ຂຶ້ນມາຕົບຕາຄົນບໍ່ໄດ້ແນ່ນອນ! ຂ້ອຍເອງເຫັນລາຊາໂລກັບຕາກ່ອນທີ່ຈະເອົາໄປຝັງ. ລາວໄດ້ຕາຍອີ່ຫຼີອີ່ຫຼໍ່!
ຕ້ອງໄປບອກພວກນັກທຳກັບພວກຟາຣີຊາຍດຽວນີ້ເລີຍ.
ຖ້າທາງເຢຣູຊາເລັມຮູ້ເລື່ອງນີ້ ພວກເຂົາຕ້ອງແຕ່ງຕັ້ງຄົນນີ້ເປັນກະສັດແນ່ນອນ. ຕ້ອງຮີບລົງມືເຮັດຫຍັງຈັກຢ່າງກ່ອນແລ້ວລະ.
ວັນນີ້ເຈົ້າເຢຊູ ສະແດງກົນໄດ້ຍິ່ງໃຫຍ່ສົມຄວນ. ເຮັດເອົາຄົນເບິ່ງເຊື່ອໄປໝົດເລີຍວ່າເຮັດໃຫ້ຄົນຟື້ນຄືນຈາກຄວາມຕາຍໄດ້.
ຂ້ອຍບໍ່ສົນວ່າຈະເຮັດໄດ້ແນວໃດ ຖ້າຢຸດລາວບໍ່ໄດ້ ລາວຈະຄຸມຫົວໃຈຂອງຄົນໄວ້ໄດ້ໝົດ.
ຖ້າຂືນປ່ອຍໃຫ້ມີການຈະລາຈົນເກີດຂຶ້ນອີກລະກໍ ໂຣມຕ້ອງປົດເຮົາອອກຈາກຕຳແໜ່ງແນ່ນອນ. ໂທດຖານທີ່ບໍ່ສາມາດຮັກສາຄວາມສະຫງົບໄວ້ໄດ້.

ໂຢຮັນ 11:44-48




ມັດທາຍ 10:22, 24:2, 5-9, 21, 27-31;  ລູກາ 19:43-44, 21:8; ໂຢຮັນ 11:49-53; ພຣະນິມິດ 2:10




ມັດທາຍ 20:19, 26:2; ໂຢຮັນ 12:1-2, 14:6




ມັດທາຍ 20:19; ໂຢຮັນ 12:3-8, 10:11


ພຣະອາຈານ ເຢຣູຊາເລັມ ທັງເມືອງ ກຳລັງລໍຮັບສະເດັດພຣະອົງ!
ໄປເອົາລູກລາມາໃຫ້ເຮົາຂີ່ໂຕໜຶ່ງເດີ. ເຮົາຈະໄປເຢຣູຊາເລັມອີກເທື່ອໜຶ່ງເປັນເທື່ອສຸດທ້າຍ.
ພຣະອາຈານ ຄົນນັບເປັນພັນໆຄົນ ກຳລັງລໍຮັບສະເດັດພຣະອົງເຂົ້າເມືອງເຢຣູຊາເລັມ ພວກເຂົາຈະສະຖາປະນາພຣະອົງເປັນກະສັດ.
ເຮົາຈະຖືກປະຕິເສດແລະຖືກຄຶງທີ່ໄມ້ກາງແຂນ. ແຕ່ໃນວັນທີ່ສາມເຮົາຈະເປັນຄືນມາຈາກຄວາມຕາຍ.
ກະສັດຂອງຊົນຊາດຢິວຊົງພຣະຈະເລີນ!
ຂໍພຣະເຈົ້າຊົງອວຍພອນພຣະຜູ້ສະເດັດມາໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ.
ລູກຊາຍຂອງກະສັດດາວິດຈົ່ງຊົງພຣະຈະເລີນ.
ຂໍທາງໃຫ້ກະສັດແຫ່ງອິດສະຣາເອນດ້ວຍ.
ສັນລະເສີນພຣະເຈົ້າ.
ພຣະອົງຄືພຣະຜູ້ສະເດັດມາປົດປ່ອຍພວກເຮົາຕາມພຣະສັນຍາ.

ໂຢຮັນ 12:12-13


ລູກຊາຍຂອງກະສັດ ດາວິດ! ປົດປ່ອຍ ພວກເຮົາດ້ວຍ!
ຜູ້ຄົນເອີ້ນລາວວ່າ ພຣະເມຊີອາ ຜູ້ທີ່ພຣະເຈົ້າຊົງສັນຍາໄວ້!
ຜູ້ຄົນເອີ້ນລາວວ່າ ກະສັດແຫ່ງຊາດຢິວ
ລາວຈະໄປທີ່ພຣະວິຫານເຮັດຫຍັງ? ໜ້າຈະຮູ້ວ່າ ຊີວິດຂອງຕົນເອງ ກຳລັງຕົກຢູ່ໃນອັນຕະລາຍ.


ພວກເຂົາຍັງຄົງຢຽບຢ່ຳພຣະ ວິຫານຂອງພຣະເຈົ້າ. ເບິ່ງເໝືອນ ຕະຫຼາດຫຼາຍກວ່າເປັນວິຫານ ແຫ່ງການອະທິຖານ.
ໂຕນີ້ຂາຍໃຫ້ທ່ານເປັນພິ ເສດເລີຍ ປະໂລຫິດກວດແລ້ວ ວ່າໃຊ້ເປັນເຄື່ອງບູຊາໄດ້.
ຖ້າຢາກແລກໄດ້ລາຄາ ດີກວ່ານີ້ ຕ້ອງໄປທີ່ອື່ນເພາະ ຂ້ອຍໃຫ້ໄດ້ສູງສຸດພຽງນີ້.




ເພງສັນລະເສີນ 69:9; ມັດທາຍ 21:12-13




ມັດທາຍ 24:14-16; ມາຣະໂກ 13:5-13; ລູກາ 17:26-37; ໂຢຮັນ 12:23-24; 2 ເປໂຕ 3:10


ບັດນີ້ຈິດໃຈຂອງເຮົາເປັນທຸກບໍ່ຮູ້ຈະເວົ້າຢ່າງໃດດີ ຈະເວົ້າວ່າ “ຂ້າແດ່ພຣະບິດາ ຂໍຊົງໂຜດຊ່ວຍຂ້າພະອົງໃຫ້ພົ້ນຈາກຊ່ວງເວລານີ້” ບໍ່ໄດ້ ເພາະທີ່ເຮົາມາໃນໂລກນີ້ກໍເພື່ອໃຫ້ເຫດການນີ້ເກີດຂຶ້ນ.
ຂ້າແດ່ພຣະບິດາ ຂໍໃຫ້ພຣະນາມຂອງພຣະອົງຈົ່ງໄດ້ຮັບກຽດ.
ເຮົາໄດ້ໃຫ້ນາມຂອງເຮົາໄດ້ຮັບກຽດແລ້ວ ແລະເຮົາຈະໃຫ້ຮັບກຽດອີກ.
ພຣະເຈົ້າກ່າວກັບພຣະອົງ!
ສຽງດັງເໝືອນຟ້າຮ້ອງ!
ເທວະດາອົງໜຶ່ງກ່າວກັບພຣະອົງ!
N ສຽງນັ້ນເກີດຂຶ້ນເພື່ອທ່ານທັງຫຼາຍ ບໍ່ແມ່ນເພື່ອເຮົາ. ເຖິງເວລາແລ້ວທີ່ເຈົ້າໂລກນີ້ ຄືຊາຕານຈະຖືກກຳຈັດອອກໄປ ແລະຖ້າເຮົາຖືກຍົກຂຶ້ນເທິງກາງແຂນ ເພື່ອຈະໄດ້ຕາຍ ເຮົາຈະຊັກນຳຄົນເປັນຈຳນວນຫຼາຍໃຫ້ມາຫາເຮົາ.
O ເຮົາຮູ້ຈາກຜູ້ປະກາດພຣະທຳວ່າ ພຣະເມຊີອາ ຈະຊົງຢູ່ເປັນນິດນິລັນດອນ ແຕ່ເປັນຫຍັງທ່ານເວົ້າວ່າ ທ່ານຈະຕ້ອງຕາຍ? ຖ້າດັ່ງນັ້ນໃຜກັນເປັນພຣະເມຊີອາ?
ໃຜທີ່ປະຕິເສດເຮົາ ແລະຄຳເວົ້າຂອງເຮົາ ຜູ້ນັ້ນກໍປະຕິເສດພຣະເຈົ້າ. ເຮົາເປັນແສງສະຫວ່າງຂອງໂລກນີ້. ຖ້າພວກທ່ານເຊື່ອເຮົາ ພວກທ່ານກໍຈະບໍ່ຕົກຢູ່ໃນຄວາມມືດ ແຕ່ຈະໄດ້ຮັບຊີວິດນິລັນດອນ.
P ທ່ານທັງຫຼາຍຈະມີຄວາມສະຫວ່າງຢູ່ນຳອີກໜ້ອຍໜຶ່ງ ແລະຂະນະທີ່ມີຄວາມສະຫວ່າງຢູ່ ກໍຈະວາງໃຈໃນຄວາມສະຫວ່າງນັ້ນ ເພື່ອຈະໄດ້ເປັນລູກແຫ່ງຄວາມສະຫວ່າງ.
Q ຟັງແລ້ວງົງໄປໝົດ.

ໂຢຮັນ 12:27-36


ຈົ່ງໄປຕຽມອາຫານມື້ແລງ ສຳລັບເທດສະການປັດສະ ຄາໃຫ້ພວກເຮົາກິນເຖີດ.
ເຮົາປາຖະໜາຈະກິນປັດສະ ຄາມື້ນີ້ກັບພວກເຈົ້າກ່ອນຕ້ອງທົນທຸກທໍ ລະມານ. ເຮົາຈະບໍ່ກິນປັດສະຄານີ້ອີກ ຈົນ ກວ່າແຜ່ນດິນຂອງພຣະເຈົ້າຈະມາເຖິງໂລກນີ້ ແລ້ວ. ເມື່ອເຖິງຕອນນັ້ນພວກເຈົ້າຈະໄດ້ກິນ ອາຫານຮ່ວມໂຕະກັບເຮົາ ແລະພວກເຈົ້າຈະ ໄດ້ນັ່ງເທິງບັນລັງພິພາກສາຊົນອິດສະຣາ ເອນທັງ 12 ເຜົ່າ.
ເຮົາມີສິ່ງທີ່ຈະບອກໃຫ້ພວກເຈົ້າຮູ້ ເພື່ອວ່າເມື່ອມັນເກີດຂຶ້ນພວກເຈົ້າຈະໄດ້ເຊື່ອເຮົາ. ມີພຣະຄຳຂຽນໄວ້ໃນເພງສັນລະເສີນວ່າ “ຜູ້ຮັບ ປະທານອາຫານຂອງຂ້າພະອົງກໍຍົກສົ້ນຕີນໃສ່ ຂ້າພະອົງ” ເຮົາກຳລັງບອກພວກເຈົ້າວ່າ ມືຂອງ ຄົນໜຶ່ງໃນພວກເຈົ້າຊຶ່ງຈະທໍລະຍົດເຮົາ. ແລະ ຄົນນັ້ນກໍຢູ່ເທິງໂຕະໜ່ວຍນີ້ດ້ວຍ.
ເປັນສິ່ງທີ່ພຣະເຈົ້າຊົງ ຕຶກຕອງໄວ້ກ່ອນແລ້ວ ແຕ່ວິບັດຈະເກີດແກ່ຜູ້ທີ່ ຈະເຮັດການນັ້ນ.
ຂ້າພະອົງຫຼື? ຂ້າພະອົງບໍ່ຢາກ ເປັນຄົນທໍລະຍົດພຣະອົງ.
ບໍ່ແມ່ນຂ້າ ພະອົງຕີ?
ພຣະອາຈານ ຂ້າ ພະອົງບໍ່ມີວັນທໍລະ ຍົດພຣະອົງດອກ.

ລູກາ 22:8-23




ມັດທາຍ 26:23-29; ໂຢຮັນ 13:26-30




ມັດທາຍ 26:33-35; ໂຢຮັນ 13:31-38; 1 ໂກຣິນໂທ 11:24-25




ໂຢຮັນ 14:1-3; 1 ໂກຣິນໂທ 11:24-26




ມັດທາຍ 26:30; ໂຢຮັນ 14:5-10, 25-30




ມັດທາຍ 26:31,38; ໂຢຮັນ 16:19-20, 17:1-10




ເພງສັນລະເສີນ 23:5-6; ລູກາ 22:41-44; ເຮັບເຣີ 6:6; 12:2




ມັດທາຍ 26:40, 45-50; ໂຢຮັນ 12:27, 18:1-4


ເຢຊູໄທນາຊາເຣັດ.
ເຮົາເອງ
ລະວັງເດີ ຄົນນີ້ ມີລິດອຳນາດ!
ພວກທະຫານຢ້ານ ພຣະເຢຊູ ຈົນເຊລົ້ມລົງ
ຄົນນັ້ນແຫຼະ! ຢ້ານເຮັດຫຍັງ? ຈັບຕົວໄປເລີຍ!
ເຮົາບໍ່ຍອມໃຫ້ ພວກເຈົ້າຈັບພຣະອົງ!
ໂອ໊ຍ..ຍ...ຍ

ໂຢຮັນ 18:4-6,10




ມັດທາຍ 26:52-57; ມາລະໂກ 14:51-52; ລູກາ 22:50-51


ຢ່າງໄປ! ພວກເຂົາຢາກ ໃຫ້ມັນຈົບໆໄປ ກ່ອນ ຜູ້ຄົນຈະຮູ້ເລື່ອງ.
ພວກທະຫານຈັບພຣະເຢຊູ ໄປຕໍ່ໜ້າທີ່ປະຊຸມ ຂອງພວກປະໂລຫິດແລະພະຍານຕ່າງໆ.
ພວກເຂົາບອກວ່າ ເຈົ້າອ້າງຕົວວ່າເປັນ ພຣະເມຊີອາ ແລະບອກວ່າພຣະເຈົ້າເປັນ ພໍ່ຂອງເຈົ້າ. ເຈົ້າບໍ່ໄດ້ມາຈາກໂລກນີ້. ບອກຕົວ່າ ເຈົ້າມາຈາກໃສ?
ເຮົາສັ່ງສອນສະເໝີທັງໃນໂຮງທຳມະເທດສະ ໜາແລະພຣະວິຫານ. ເຮົາບໍ່ໄດ້ສອນສິ່ງໃດຢ່າງລັບໆ ເລີຍ. ທ່ານຖາມເຮົາເຮັດຫຍັງ? ຖາມພວກທີ່ເຄີຍຟັງ ເຮົາສອນຕົ ພວກເຂົາຮູ້ວ່າເຮົາສອນຫຍັງ.
ຂ ປ ງ ງ
ຢ່າເວົ້າຫຼິ້ນກັບມະ ຫາປະໂລຫິດເດີ.
ຖ້າເຮົາເວົ້າຜິດ ທ່ານຈົ່ງ ເປັນພະຍານໃນສິ່ງທີ່ຜິດ ນັ້ນ. ແຕ່ຖ້າເຮົາເວົ້າຖືກ ທ່ານຕົບເຮົາເຮັດຫຍັງ?
ເບີກຕົວພະຍານທີ່ຮູ້ ເຫັນເລື່ອງເຂົ້າມາ.

ໂຢຮັນ 18:19-23




ມັດທາຍ 26:59-65




ມັດທາຍ 26:67-70; ລູກາ 22:64-65




ມັດທາຍ 26:71-75, 27:1-2; ລູກາ 22:58-62, 23:1


ເອົາແມວເກົ້າຫາງ ລົງຫຼັງມັນເລີຍ!
ພຣະເຈົ້າ ນີ້ຂ້ອຍເຮັດຫຍັງລົງໄປ ຂ້ອຍປະຕິເສດພຣະອົງເຖິງ 3 ເທື່ອ ຢ່າງ ທີ່ພຣະອົງກ່າວໄວ້. ເປັນຫຍັງຕ້ອງເປັນ ຢ່າງນີ້? ເປັນຫຍັງພຣະອົງຕ້ອງຊົງຮັບ ທຸກທໍລະມານຂະໜາດນີ້?
ໄປເລີຍ ຂ້ອຍມີ ເວລາບໍ່ເທົ່າໃດເດີ.
ພຣະບິດາ ປະທານ ເຫື່ອແຮງໃຫ້ລູກດ້ວຍ.
ມາເຮັດຫຍັງອີກ? ເງິນຄ່າທໍລະ ຍົດທີ່ເຮົາຈ່າຍໃຫ້ບໍ່ພໍຫຼືແນວໃດ?
ຂ້ອຍປ່ຽນໃຈແລ້ວ. ປ່ອຍ ພຣະອົງ ແລ້ວຂ້ອຍຈະ ຄືນເງິນໃຫ້ທ່ານ.
ເງິນເປື້ອນເລືອດ ສົກກະປົກຢ່າງນັ້ນ ເຮົາບໍ່ແຕະ ຕ້ອງມັນດອກ ແນວໃດໆ ອາຈານຂອງເຈົ້າກໍຕ້ອງ ຕາຍພາຍໃນຄືນນີ້. ບໍ່ມີຫຍັງຕ້ອງຢ້ານອີກເດີ. ເຮົາ ອາດຈະໃຊ້ເຈົ້າຊ່ວຍຈັບຄົນອື່ນໆໄດ້ອີກ.
ເອົາເງິນທ່ານຄືນໄປ! ຂ້ອຍ ບໍ່ຕ້ອງການແລ້ວ! ຂ້ອຍທົນ ມີຊີວິດຢູ່ແບບນີ້ບໍ່ໄດ້ແລ້ວ!
ເປີ້ນເພດແທັK
ຂ້ອຍທົນ ບໍ່ໄດ້ແລ້ວ.

ມັດທາຍ 27:3-6




ມັດທາຍ 27:5; ກິດຈະການ 1:18




ມັດທາຍ 27:8; ມາຣະໂກ 15:14; ລູກາ 23:1-4; ໂຢຮັນ 18:29-38; ກິດຈະການ 1:18




ລູກາ 23:11; ໂຢຮັນ 19:1-2


ຫຼັງແຕກ ໝົດເລີຍ!
ກະສັດຕ້ອງ ໃສ່ມົງກຸດ.
ຂ້ອຍຢາກຊ້ຽນຕີ ກະສັດມາດົນແລ້ວ.
ມັນບອກວ່າມັນເປັນ ກະສັດ. ເອົາເສື້ອຄຸມ ສີມ່ວງໃສ່ໃຫ້ມັນແດ່.
ກະສັດຕ້ອງ ໃສ່ມົງກຸດ.
ຮະ ຮະ ຮະ! ນີ້ລະ ເຮັດມົງກຸດໄດ້ເລີຍ!
ໂອ໊ຍ...
ເອົ້າ ເອົາໄມ້ຄ້ອນເທົ້າ ໄປນຳ ກະສັດເອີຍ! ຮະ ຮະ ຮະ!
ສວມມົງກຸດລົງ ໄປແໜ້ນໆແດ່.
ເຮົາຂໍຖວາຍມົງກຸດນີ້ແດ່ ທ່ານຜູ້ເປັນກະສັດ ແຫ່ງສາກົນໂລກ!
ໂອຍ...
ບັດນີ້ລຸກຂຶ້ນມາ ຢືນຊື່ໆແດ່.
ຍົກໄມ້ຄ້ອນເທົ້າ ຂຶ້ນຕີ ກະສັດ.
ຮາ ຮາ! ຊົງ ພຣະຈະເລີນ ພະເຈົ້າຂ້າ!
ແມ່ນແລ້ວ ທົນໄດ້ ເຖິງຕາເວັນຕົກກໍ ໂຊກດີແລ້ວ!

ໂຢຮັນ 19:1-3




ລູກາ 23:13-22; ໂຢຮັນ 19:4-8




ມັດທາຍ 27:24; ໂຢຮັນ 19:9-17




ມັດທາຍ 27:32; ລູກາ 23:26-33




ມັດທາຍ 27:33-34


ຈັບຂາໃຫ້ແໜ້ນໆເດີ. ບ່ອນນີ້ ທຳມະດາຕ້ອງຕອກຫຼາຍເທື່ອ ກວ່າຕະປູຈະຊອດທະລຸກະດູກ.
ໂອ ມາລີອາ ຂ້ອຍບໍ່ຢາກເຊື່ອ. ຂ້ອຍທົນບໍ່ໄດ້ແທ້ໆ.
ບໍ່ເຄີຍຄິດເລີຍວ່າເລື່ອງ ຈະອອກມາເປັນຢ່າງນີ້.
ດຶງຕິ ບັກໂງ່!
ກໍອອກແຮງຊ່ວຍອີກ ໜ້ອຍໜຶ່ງຕິ ກິນແຮງ ຄົນອື່ນຢູ່ໄດ້.
ພຣະບິດາຂໍຊົງໂຜດຍົກ ໂທດໃຫ້ພວກເຂົາ. ພວກເຂົາບໍ່ ຮູ້ວ່າພວກເຂົາເຮັດຫຍັງ.
ໂອ ໂຢຮັນ ດີໃຈທີ່ທ່ານ ຢູ່ບ່ອນນີ້ດ້ວຍ. ມັນໜ້າ ຢ້ານເຫຼືອເກີນ.
ພວກເຮົາທຸກຄົນ ປະຖິ້ມພຣະອົງ

ລູກາ 23:32-34




ເພງສັນລະເສີນ 22:18; ມັດທາຍ 27:39-43; ໂຢຮັນ 19:23-24




ລູກາ 23:36-43; ໂຢຮັນ 19:25-27




ມັດທາຍ 27:45-50; ລູກາ 23:44-46; ໂຢຮັນ 19:30; 2 ໂກຣິນໂທ 5:21




ເພງສັນລະເສີນ 32:20; ເສກາລິຢາ 12:10; ມັດທາຍ 27:54; ໂຢຮັນ 19:31-37


ຢ່າງໜ້ອຍພວກເຂົາ ກໍບໍ່ໄດ້ທຸບກະດູກຂາ ພຣະອົງໃຫ້ຫັກ.=
ມາລີອາ ເຮົາຈະໄປຫາ ເບິ່ງວ່າມີໃຜຈະຊ່ວຍເອົາ ພຣະສົບໄປຝັງໄດ້ແດ່.
ວັນສະບາໂຕ ເລີ່ມເມື່ອຕາເວັນຕົກດິນ ແລະຕອນນີ້ກໍໃກ້ເວລາເຕັມທີ. ພວກເຂົາ ຕ້ອງຮີບເອົາພຣະສົບໄປຝັງໃນອຸບໂມງ.
ໂຢເຊບ ເສດຖີຄົນໜຶ່ງທີ່ ບໍ່ໄດ້ເປັນອັກຄະສາວົກ ໃນສິບສອງຄົນນັ້ນ ຍິນດີ ມອບອຸບໂມງຝັງສົບຂອງຕົນ ໃຫ້ຝັງພຣະສົບພຣະເຢຊູ.
ອີກບຶດດຽວວັນສະບາໂຕ ກໍຈະເລີ່ມແລ້ວ. ເອົາພຣະ ສົບໄປຝັງໃນອຸບໂມງໃໝ່ ຂອງເຮົາໄດ້ເລີຍ.
ຂອບໃຈ ຂອບໃຈຫຼາຍໆ ທ່ານເປັນເພື່ອນທີ່ດີຂອງ ພວກເຮົາສະເໝີ.

ໂຢຮັນ 19:31,28




ມັດທາຍ 27:59-66; ໂຢຮັນ 19:40




ມັດທາຍ 28:1-2; ລູກາ 24:1


ເທື່ອນີ້ໄຫວ ແຮງແທ້ໆ.
ຟັງສຽງຜູ້ຊາຍພວກ ນັ້ນຮ້ອງແມ! ຕ້ອງມີ ໃຜບາດເຈັບແທ້ໆ.
ເກີດຫຍັງຂຶ້ນ...?
ເຮີ້ຍ!
ໂອ ເທວະດາ!
ມັນຫຍັບຫີນ ກ້ອນນັ້ນອອກ!
ຈະຂ້າພວກເຮົາ!
ພຣະແມ່ເຈົ້າ ຊ່ວຍລູກແດ່!
ຢ່າປະຖິ້ມຂ້ອຍ! ພຣະເຈົ້າເມດ ຕາຂ້ອຍແດ່!
ເປັນໄປບໍ່ໄດ້!
ແລ່ນ ເອົາຕົວລອດ ໄວ! ແລ່ນ ເອົາຕົວ ລອດໄວ!

ມັດທາຍ 28:2-4


ຫີນກ້ອນໃຫຍ່ຫຼາຍ. ເຮົາຈະໄປຫາຜູ້ຊາຍທີ່ໃດມາຊ່ວຍເອົາອອກລະ?
ບໍ່ຮູ້ຄືກັນ ແຕ່ນີ້ມັນສາມວັນສາມຄືນແລ້ວ ບໍ່ໄດ້ໃສ່ເຄື່ອງຫອມຫຍັງ ປານນີ້ພຣະສົບຄົງສົ່ງກິ່ນແລ້ວ.
ພວກເຂົາບໍ່ຮູ້ວ່າ ມີທະຫານເຝົ້າຢູ່ໜ້າອຸບໂມງຝັງພຣະສົບ.
ມີຄົນກິ້ງຫີນອອກແລ້ວ!
ອີກບຶດໜຶ່ງຕໍ່ມາ.
ພຣະສົບຫາຍໄປແລ້ວ. ອຸບໂມງຫວ່າງເປົ່າ!
ອ້າວ ທ່ານເປັນໃຜ? ພຣະສົບພຣະເຢຊູຫາຍໄປໃສ?
ຜ້າພັນພຣະສົບຍັງຢູ່.
ຢ່າແປກໃຈເລີຍ ເຮົາຮູ້ວ່າພວກທ່ານມາຫາພຣະເຢຊູ ຜູ້ຊຶ່ງຖືກຄຶງທີ່ກາງແຂນ. ພຣະອົງບໍ່ຊົງຢູ່ບ່ອນນີ້ ຊົງເປັນຄືນມາແລ້ວຕາມທີ່ຊົງບອກໄວ້.
ມາເບິ່ງບ່ອນທີ່ພວກເຂົາວາງພຣະສົບໄວ້ຕີ ແລ້ວອອກໄປບອກບັນດາສາວົກຂອງພຣະອົງວ່າພຣະເຢຊູຈະໄປພົບພວກເຂົາທີ່ຄາລີເລ.
ພຣະເຢຊູ ຊົງຟື້ນຄືນຊີວິດແລ້ວ! ທ່ານບອກວ່າ ຊົງເປັນຄືນຈາກຄວາມຕາຍເໝືອນລາຊາໂລ!
ຄົນພວກນັ້ນເປັນເທວະດາ!
ພຣະເຢຊູ ຊົງຄືນພຣະຊົນແລ້ວ!
ໄວໄວ! ເຮົາຕ້ອງຮີບໄປບອກພວກສາວົກ!

ມາຣະໂກ 16:3-8


ພຣະເຢຊູ ຊົງຟື້ນ ຄືນແລ້ວ! ພວກເຮົາຫາກໍ ມາຈາກທີ່ຝັງພຣະສົບ.
ພຣະເຢຊູ ບໍ່ຊົງຢູ່ ບ່ອນນັ້ນແລ້ວ ແຕ່ມີເທວະດາຢູ່.
ເຮົາຈື່ໄດ້ວ່າພຣະອົງ ບອກເຮົາວ່າຈະຊົງເປັນຄືນ ມາໃນວັນທີ່ສາມ.
ເທວະດາບອກວ່າພຣະເຢຊູ ຈະໄປພົບພວກທ່ານທີ່ຄາລີເລ.
ເປໂຕ ທ່ານຈະໄປໃສ?
ໄປທີ່ອຸບ ໂມງຝັງສົບ.
ໂຢຮັນແລ່ນຕາມ ແຕ່ລາວ ອອກໜ້າເປໂຕໄປ.
ໂຢຮັນ! ຖ້າແດ່! ຂ້ອຍແລ່ນບໍ່ທັນ!
ອຸບໂມງຫວ່າງເປົ່າ!
ໝາຍຄວາມວ່າແນວໃດ?

ໂຢຮັນ 20:2-9


ໂຢຮັນ ຜ້າພັນພຣະສົບພັບຢູ່ເໝືອນກັບວ່າພຣະອົງຫາກໍ ຊົງລຸກຂຶ້ນແລ້ວຍ່າງອອກໄປ. ເປັນໄປບໍ່ໄດ້ດອກ.
ແຕ່ບໍ່ເຫັນເທວະດາຈັກອົງ. ພວກຜູ້ຍິງຄົງຕາຝາດ.
ເຈົ້າເຫັນຜູ້ຊາຍສວມ ຊຸດຂາວຈັ່ງຊັ້ນຫຼື?
ບໍ່ມີຜູ້ຊາຍຢູ່ເລີຍ. ບໍ່ມີ ເທວະດາ. ບໍ່ມີຫຍັງເລີຍ. ພຣະສົບກໍບໍ່ຢູ່.
ຮື ຮື
ຍິງເອີຍ ເຈົ້າ ຮ້ອງໄຫ້ເສຍໃຈ ເຮັດຫຍັງ?
ພວກເຂົາເອົາພຣະອົງໄປ ແລ້ວຂ້ອຍບໍ່ຮູ້ວ່າເອົາໄປໃສ.
ມາລີອາ.
ພຣະອາຈານ!
ມາລີອາ ຢ່າຟ້າວແຕະຕ້ອງຕົວເຮົາ. ເຮົາຍັງບໍ່ໄດ້ຂຶ້ນໄປຫາພຣະບິດາໃນ ສະຫວັນ. ເຈົ້າຈົ່ງໄປບອກບັນດາ ສາວົກເຖິງສິ່ງທີ່ເຈົ້າເຫັນ ແລ້ວເຮົາ ຈະໄປພົບພວກເຂົາທີ່ຄາລີເລ.
ພຣະເປັນເຈົ້າ ພຣະອົງຍັງຊົງມີຊີວິດຢູ່!

ໂຢຮັນ 20:7-17


ພວກສາວົກບໍ່ເຊື່ອເລື່ອງທີ່ວ່າ ພຣະເຢຊູຊົງຟື້ນຈາກຄວາມຕາຍ.
ເປໂຕກັບໂຢຮັນບໍ່ເຫັນຫຍັງຢູ່ທີ່ອຸບໂມງ. ຂ້ອຍວ່າຄົງມີໃຜລັກພຣະສົບໄປ. ຜູ້ຍິງພວກນັ້ນບໍ່ໜ້າໄວ້ວາງໃຈ ພວກເຂົາຄວນຢຸດເວົ້າໄດ້ແລ້ວ.
ພວກເຮົາຈະກັບໄປບ້ານ ເອມາອູດ ບໍ່ຮູ້ຈະຢູ່ເຮັດຫຍັງແລ້ວ.
ວັນນີ້ເປັນວັນທີ່ສາມແລ້ວ.
ຮື! ສົງໄສແທ້ວ່າ ຖ້າພຣະອົງຕັ້ງໃຈຈະເປັນຄືນມາຈາກຄວາມຕາຍແລ້ວ ເປັນຫຍັງຈິ່ງປ່ອຍໃຫ້ພວກເຂົາຂ້າພຣະອົງ?
ແມ່ນແລ້ວ. ຖ້າຊົງຢາກເປັນກະສັດ ກໍບໍ່ເຫັນຈະຕ້ອງເຮັດແບບບໍ່ໃຫ້ໃຜຮູ້ເລີຍນີ້ນາ ແມ່ນຫຼືບໍ່?
ຂໍຍ່າງໄປນຳແດ່ໄດ້ບໍ?
ໂອຍ ຕົກໃຈໝົດເລີຍ ທ່ານມາຈາກໃສນີ້?
ໄດ້ຕີ ອາກາດຢ່າງນີ້ຍ່າງສະບາຍດີ.
ຂ້ອຍບັງເອີນໄດ້ຍິນພວກທ່ານລົມກັນມາ. ເບິ່ງເໝືອນກຳລັງເປັນທຸກໃຈຈັ່ງຊັ້ນລະ.
ທ່ານບໍ່ຮູ້ເລື່ອງທີ່ເກີດຂຶ້ນເມື່ອ 3 ວັນກ່ອນດອກຫຼື? ກ່ຽວກັບພຣະເຢຊູ ໄທນາຊາເຮັດຈັ່ງໃດລະ?
ເຮົາຫວັງວ່າເພິ່ນຄືພຣະເມຊີອາ ແຕ່ກໍຖືກຄຶງໄວ້ທີ່ໄມ້ກາງແຂນ.=
ວັນນີ້ຕອນເຊົ້າພວກຜູ້ຍິງໄປທີ່ອຸບໂມງຝັງສົບ ປາກົດວ່າສົບຫາຍໄປ. ແລ້ວພວກນັ້ນບອກວ່າເຫັນເທວະດາມາບອກວ່າພຣະເຢຊູຍັງມີຊີວິດຢູ່.
ສາວົກສອງຄົນເລີຍແລ່ນໄປເບິ່ງທີ່ອຸບໂມງ ແຕ່ກໍບໍ່ເຫັນທັງພຣະເຢຊູ ທັງເທວະດາ ແຕ່ສົບກໍຫາຍໄປ.
ມະນຸດຢ່າງພວກເຈົ້າເຊື່ອສິ່ງທີ່ຜູ້ປະກາດພຣະທຳຂຽນໄວ້ ກ່ຽວກັບພຣະເມຊີອາ ບໍ່ງ່າຍເທົ່າໃດເລີຍ. ພຣະຄຳພີບໍ່ໄດ້ທຳນວາຍໄວ້ຫຼືວ່າພຣະເຢຊູ ຈະຊົງຮັບຄວາມທຸກທໍລະມານພວກນີ້ກ່ອນ ແລ້ວຈະຊົງນຳຄວາມຮຸ່ງເຮືອງແຫ່ງອານາຈັກສະຫວັນລົງມາ.

ລູກາ 24:13-26


ຜູ້ປະກາດພຣະທຳເອຊາຢາ ບອກວ່າ ພຣະຄຣິດ ຈະສະເດັດມາເມື່ອອິດສະຣາເອນຫຼືຢູດາຍບໍ່ມີກະສັດປົກຄອງ (7:16) ແລະເວລານີ້ກໍເປັນຢ່າງນັ້ນ. ເອຊາຢາ ບອກໄວ້ດ້ວຍວ່າພຣະອົງຈະຊົງເປັນເຊື້ອສາຍຂອງເຈດສີ (11:1).

ຕາມຖ້ອຍຄຳຂອງຜູ້ປະກາດພຣະທຳ ມີກາ ພຣະອົງຊົງບັງເກີດທີ່ເບັດເລເຮມ ແຫ່ງແຄວັ້ນຢູດາຍ (ມີກາ 5: 2) ຊຶ່ງກໍເປັນຢ່າງນັ້ນ. ຜູ້ປະກາດພຣະທຳຫຼາຍຄົນບອກວ່າ ຈະຊົງເກີດໃນຕະກູນຂອງກະສັດດາວິດ (ເຢເຣມີຢາ 23:5-6; ເພງສັນລະເສີນ 89) ທັງໂຢເຊບ ແລະມາລີອາ ສືບເຊື້ອສາຍມາຈາກດາວິດ.

ເອຊາຢາ ກ່າວວ່າ ເຂົາຈະເອີ້ນພຣະຄຣິດວ່າ "ພຣະເຈົ້າຜູ້ຊົງມີລິດ ພຣະບິດານິລັນດອນ" ແລະພຣະເຢຊູກ່າວໄວ້ວ່າ "ຖ້າທ່ານເຫັນພຣະອົງທ່ານກໍເຫັນພຣະບິດາ" ຢ່າງນັ້ນບໍ່ແມ່ນຫຼື?

ເອຊາຢາ ເຜີຍພຣະຄຳພີວ່າ ຍິງພົມມະຈາລີ ຈະຕັ້ງທ້ອງ (7:14) ແລະຈະໃຫ້ກຳເນີດບຸດຊາຍ (9:6) ແລະຈະຊົງຈະເລີນໄວຂຶ້ນ (49:7; 53:2).

ຜູ້ປະກາດພຣະທຳບອກວ່າ ພຣະຄຣິດ ຈະຊົງເຮັດໃຫ້ຄົນຕາບອດເບິ່ງເຫັນ ຊົງປົດປ່ອຍຜູ້ຖືກຄຸມຂັງ (42:7) ຈະຊົງເປັນຜູ້ລ້ຽງແກະແຫ່ງວົງວານອິດສະຣາເອນ (40:11) ແລະຈະສະເດັດມາກຸງຊີໂອນ ໃນຖານະພຣະຜູ້ໄຖ່ (59:20).

ເອຊາຢາທຳນວາຍວ່າ ພຣະອົງຈະຊົງຖືກຄົນອິດສະຣາເອນປະຕິເສດ (53:1,3). ແລະຜູ້ປະກາດພຣະທຳຍັງເຫັນລ່ວງໜ້າເຖິງຄວາມທຸກທໍລະມານຂອງພຣະອົງ ຊົງຖືກເພື່ອນທໍລະຍົດ (ເພງສັນລະເສີນ 41:9) ດ້ວຍຫຼຽນເງິນພຽງ 30 ຫຼຽນ (ເສກາລີຢາ 11:12-13) ແລະວ່າຈະບໍ່ຊົງຕອບໂຕ້ຜູ້ກ່າວຫາພຣະອົງ (53:7) ຈະຊົງໄດ້ຮັບບາດເຈັບຟົກຊ້ຳ (53:5) ໜວດຂອງພຣະອົງຈະຖືກດຶງອອກເສຍ (50:6) ພວກເຂົາຈະຈ້ອງເບິ່ງພຣະກາຍເປົ່າເປືອຍແລະຖົ່ມນ້ຳລາຍຫົດພຣະພັກ (50:6) ຈະຊົງຫັນຫຼັງໃຫ້ຜູ້ທີ່ໂບຍຕີພຣະອົງ (50:6) ໜ້າຕາຂອງພຣະອົງຈະເສຍໂສມຫຼາຍເຫຼືອທີ່ຈະເໝືອນມະນຸດ (52:14). ຜູ້ປະກາດພຣະທຳເສກາລີຢາ (12:10) ບອກພວກເຮົາວ່າ ອົງພຣະຜູ້ຊ່ວຍໃຫ້ລອດພົ້ນຈະຖືກແທງ ແລະຖືກເພື່ອນຂອງພຣະອົງໂບຍຕີ ແລະສ້າງບາດແຜທີ່ມືຂອງພຣະອົງ (ເສກາລີຢາ 13:6-7) ພຣະອົງຈະເປັນເໝືອນລູກແກະທີ່ຖືກນຳໄປຂ້າ (53:7) ແລະຜົນສຸດທ້າຍຂອງສິ່ງທີ່ເກີດຂຶ້ນນີ້ຄືຄວາມຕາຍຂອງພຣະອົງ (53:8,12; ເພງສັນລະເສີນ 22:15) ແລະຈະຊົງຖືກຝັງໄວ້ໃນອຸບໂມງຝັງສົບຂອງເສດຖີ (53:9).

ແຕ່ພຣະອົງຕ່າງຫາກເປັນຜູ້ຊົງຢູ່ເໜືອຄວາມທຸກທັງປວງນີ້. ພຣະເຢຊູຊົງກ່າວໄວ້ເອງວ່າ ບໍ່ມີຜູ້ໃດຍາດຊົງຊີວິດໄປຈາກພຣະອົງໄດ້ ແຕ່ພຣະອົງສະຫຼະຊີວິດດ້ວຍໃຈສະໝັກຂອງພຣະອົງເອງ ບໍ່ແມ່ນຫຼື? (ໂຢຮັນ 10:18) ເອຊາຢາ ບອກເຮົາວ່າ ເປັນນ້ຳພຣະໄທຂອງພຣະເຈົ້າທີ່ຈະໃຫ້ພຣະອົງຟົກຊ້ຳ (53:10) ເມື່ອພຣະອົງຊົງກະທຳໃຫ້ວິນຍານຂອງທ່ານເປັນເຄື່ອງບູຊາໄຖ່ບາບ (53:10). ພຣະອົງຕ້ອງຊົງຖືກຕີເພາະບາບຜິດຂອງຜູ້ອື່ນ (53:8) ພຣະອົງຊົງແບກບາບຂອງຄົນເປັນຈຳນວນຫຼາຍ (53:12) ແລະຈະຊົງກະທຳໃຫ້ຄົນເປັນຈຳນວນຫຼາຍນັບໄດ້ວ່າເປັນຄົນຊອບທຳດ້ວຍຄວາມຕາຍຂອງພຣະອົງ (53:11).

ເຖິງປານນັ້ນຄວາມຕາຍບໍ່ແມ່ນຈຸດຈົບ. ເອຊາຢາເບິ່ງເຫັນລ່ວງໜ້າວ່າຊີວິດຂອງພຣະອົງຈະຊົງຈະເລີນຂຶ້ນຫຼັງຈາກຊົງຕາຍ (53:10) ຈະຊົງຖືກຍົກຊູຂຶ້ນສູງເດັ່ນເປັນທີ່ເທີດທູນ ແລະຈະຊົງສູງນັກ (52:13). ຈະຊົງຊ່ວຍຜູ້ຄົນໃຫ້ລອດພົ້ນຈົນເຖິງທີ່ສຸດປາຍແຜ່ນດິນໂລກ (49:6) ຈະບໍ່ຊົງທໍ້ແທ້ (42:4) ພຣະເມຊີອາ ຈະຊົງເປັນອົງພັນທະສັນຍາໃໝ່ (42:6).

ພຣະອົງຈະຊົງເປັນຜູ້ພິພາກສາ ຈະຊົງຕີໂລກດ້ວຍຕະບອງແຫ່ງປາກຂອງພຣະອົງ (11:4). ຈະຊົງປົກຄອງຊົນຊາດອິດສະຣາເອນໃໝ່ໃນເມືອງໃໝ່ແລະໃນໂລກໃໝ່ (66). ຈະມີວັນໜຶ່ງທີ່ທຸກຫົວເຂົ່າຈະກົ້ມກາບພຣະອົງແລະທຸກລີ້ນຈະປະຕິຍານຕໍ່ພຣະອົງ.

ຖ້າຈັ່ງຊັ້ນແລ້ວບອກເຮົາຕີວ່າ ເປັນຫຍັງຈຶ່ງເສົ້າເສຍໃຈ? ພວກຜູ້ຍິງບໍ່ໄດ້ບອກຫຼືວ່າ ເທວະດາເວົ້າວ່າພຣະອົງຊົງເປັນຂຶ້ນຈາກຄວາມຕາຍແລ້ວ.
ໜ້າອັດສະຈັນແທ້ໆ!


ເຖິງເຮືອນຂ້ອຍແລ້ວ ມືດຫຼາຍແລ້ວດ້ວຍ. ເຊີນເຂົ້າໄປພັກຄ້າງຄືນບ່ອນນີ້ກ່ອນດີກວ່າ. ພວກເຮົາຍັງຢາກຟັງຄຳຂອງຜູ້ປະກາດ ພຣະທຳກ່ຽວກັບພຣະເຢຊູຕໍ່ອີກ.
ຂໍເຊີນທ່ານອະທິຖານຂໍ ພຣະພອນກ່ອນຮັບປະທານອາຫານ ເພື່ອເປັນກຽດແກ່ພວກເຮົາ.
ຂອບພຣະຄຸນພຣະເຈົ້າ ຈອມກະສັດແຫ່ງ ສາກົນຈັກກະວານ ຜູ້ປະທານອາຫານແກ່ໂລກ ຂອບພຣະຄຸນສຳລັບເຂົ້າຈີ່ມື້ນີ້.
ຮັບເອົາໄປ ກິນເຖີດ.
ພຣະເຢຊູ! ແມ່ນພຣະອົງເອງ!
ພຣະອາຈານ!
ຊົງຫາຍໄປແລ້ວ!
ສະເດັດ ໄປແລ້ວ!
ພຣະເຢຊູ ຢູ່ກັບພວກ ເຮົາຕັ້ງແຕ່ທຳອິດ
ສົມພໍດອກ ຊົງຮູ້ແຈ່ມແຈ້ງກ່ຽວ ກັບຄຳຂອງຜູ້ປະກາດພຣະທຳ.
ພຣະເຢຊູ ຊົງມີຊີວິດຢູ່! ຄວາມຕາຍຍຸດຢັ້ງພຣະອົງໄວ້ບໍ່ໄດ້! ຊົງມີຊີວິດຢູ່! ກັບໄປບອກພວກ ສາວົກທີ່ກຸງເຢຣູຊາເລັມກັນເທາະ!

ລູກາ 24:28-32




ໂຢຮັນ 20:26-31; ລູກາ 24:36-43




ມັດທາຍ 28:18-20; ລູກາ 24:44-49; ໂຢຮັນ 14:2-4




ລູກາ 24:49-51; ກິດຈະການ 1:7-11




ກິດຈະການ 1:12-14, 2:1-13, 32, 36




ກິດຈະການ 2:27, 37-41


ທ່ານເອີຍ ຂໍເສດ ເງິນໃຫ້ຄົນຍາກຈົນພິກົນ ພິການແດ່ເຖີດ.
ເປໂຕ ເຮົາບໍ່ມີເງິນເລີຍ. ທ່ານມີເສດເງິນແດ່ບໍ?
ບໍ່ມີຄືກັນ. ຕັ້ງແຕ່ພຣະວິນຍານບໍລິສຸດຢູ່ໃນເຮົາ ເຮົາມີບາງຢ່າງໃຫ້ລາວໄດ້.
ເງິນແລະຄຳເຮົາບໍ່ມີ ແຕ່ທີ່ເຮົາມີຢູ່ເຮົາຈະໃຫ້ເຈົ້າຄື ໃນພຣະນາມແຫ່ງພຣະເຢຊູຄຣິດ ຈົ່ງລຸກຂຶ້ນຍ່າງເຖີດ.
ຢ່າໄປຕົວະຄົນທີ່ເປັນງ່ອຍມາຕັ້ງແຕ່ເກີດຫຼິ້ນຕີ! ຂາລາວໃຊ້ການບໍ່ໄດ້ເລີຍ.
ພຣະເຢຊູຊົງປິ່ນປົວຮັກສາເຈົ້າໃຫ້ຫາຍດີແລ້ວ.
ເຮີ້ຍ...
ພຣະເຈົ້າຊົງລິດທານຸພາບສູງສຸດ!
ຂາລາວເຊົາລີບແລ້ວ!
ບໍ່ຢາກເຊື່ອເລີຍ! ຄົນງ່ອຍຍ່າງໄດ້ແລ້ວ!
ໃຜບອກ ກະໂດດຕ່າງຫາກ.
ສັນລະເສີນພຣະເຈົ້າ! ຂອບໃຈເດີພຣະເຢຊູ!




ກິດຈະການ 3:12, 14-19, 4:1-3


ອັດສະຈັນຢ່າງດຽວກັບ
ທີ່ພຣະເຢຊູເຄີຍເຮັດ
ຕອນທີ່ຊົງຢູ່ບ່ອນນີ້ເລີຍ.
ຕອນນີ້ພວກເຂົາ
ຈັບຄົນງ່ອຍຂໍ້ທາ
ຍ່າງໄດ້ໄປແລ້ວ.
ເພື່ອນຂ້ອຍບອກວ່າ ເຫັນ
ພຣະເຢຊູຍັງຊົງມີຊີວິດຢູ່ ຫຼັງຈາກທີ່
ພຣະອົງສິ້ນພຣະຊົນແລ້ວ. ພວກເຂົາ
ວ່າຕອນນັ້ນມີຄົນກວ່າ 500 ຄົນ ເຫັນ
ພຣະອົງພ້ອມກັນເລີຍ
ຂ້ອຍຈະໄປຕາມຫາສາວົກຄົນ
ອື່ນ ຈະໄດ້ຮຽນຮູ້ສິ່ງຕ່າງໆຫຼາຍຂຶ້ນ


N
ຂ້ອຍຄິດວ່າຄືງກາງແຂນຜູ້
ນຳໄປແລ້ວ ຈະກຳຈັດພວກນອກ
ຮີດນີ້ໝົດໄປແລ້ວເສຍອີກ
O ໄດ້ຍິນວ່າ
ມັນຍັງບໍ່ຕາຍ
P ຖ້າດັ່ງນັ້ນກໍຂ້າມັນອີກເທື່ອໜຶ່ງ
ລວມທັງພວກສາວົກມັນດ້ວຍ
Q
ພວກມັນເວົ້າກັນວ່າມັນໄປຢູ່ກັບ
ພຣະບິດາໃນສະຫວັນແລ້ວ
R ຖ້າຈັ່ງຊັ້ນ ສິ່ງສອງຄົນນັ້ນ
ໄປຢູ່ນຳກັນດ້ວຍເລີຍ.

ກິດຈະການ 4:3-6




ກິດຈະການ 4:7-21




ກິດຈະການ 13:30-32; 4:10




ກິດຈະການ 7:1-57




ກິດຈະການ 7:58-59




ກິດຈະການ 7:59-8:3




ກິດຈະການ 8:26-29




ກິດຈະການ 8:27, 30-34




ເອຊາຢາ 53:3-10; ກິດຈະການ 8:35 ; ໂຣມ 2:16




ໃນເພງສັນລະເສີນ 22:16 ບອກພວກເຮົາວ່າມືແລະຕີນຂອງພຣະອົງຈະຖືກແທງ ເປັນຈິງຕາມນັ້ນຄືຖືກແທງດ້ວຍຕະປູ. 22:14 ບອກເຖິງວ່າພຣະອົງຈະຊົງຫິວນ້ຳແລະກະດູກຂອງພຣະອົງຈະຫຼຸດລຸ່ຍໄປສິ້ນຂະນະປະເຊີນຄວາມຕາຍ ແຕ່ເພງສັນລະເສີນ 34:20 ກັບບອກວ່າພຣະເຈົ້າຈະຊົງປົ່ນປົວຮັກສາກະດູກຂອງພຣະອົງໄວ້ທັງໝົດ ບໍ່ຫັກຈັກສິ້ນດຽວ ແລະຢ່າງທີ່ທ່ານເອງກໍຮູ້ວ່າຕາມທຳນຽມ ພວກເຂົາຕ້ອງທຸບກະດູກຂອງຄົນທີ່ຖືກຄຶງທີ່ໄມ້ກາງແຂນ ແຕ່ພຣະເຢຊູຊົງຕາຍກ່ອນ ພວກເຂົາຈຶ່ງບໍ່ໄດ້ທຸບກະດູກພຣະອົງ.

ຂໍ້ 17 ໃນບົດທີ່ 22 ທຳນວາຍວ່າພວກເຂົາຈະຈ້ອງມອງພຣະອົງ ແລະຂໍ້ 18 ເວົ້າເຖິງການຈັບສະຫຼາກແບ່ງປັນເສື້ອໂຕໜຶ່ງແລະຈີກເສື້ອອີກໂຕໜຶ່ງເປັນສິ້ນໆແບ່ງກັນ. ນອກຈາກນີ້ໃນເສກາລີຢາ 12:10 ກໍບອກພວກເຮົາດ້ວຍວ່າພວກເຂົາຈະແທງພຣະອົງແລະພາຍຫຼັງຄົນຢິວກໍຈະເບິ່ງຮອຍແທງຂອງພຣະອົງ.

ເອຊາຢາ 50:6 ກ່າວວ່າ ຫຼັງຂອງພຣະອົງຈະຖືກໂບຍຕີ ແລະໜວດເຄົາຂອງພຣະອົງຈະຖືກດຶງຈາກແກ້ມ.

ເພງສັນລະເສີນ 16:10 ບອກພວກເຮົາວ່າ ພຣະສົບຂອງພຣະອົງຈະບໍ່ຢູ່ໃນອຸບໂມງດິນຈົນເນົ່າເປື່ອຍ.

ຄຳທຳນວາຍບອກພວກເຮົາວ່າພຣະອົງຈະຖືກເພື່ອນທໍລະຍົດ ແລະຜູ້ທໍລະຍົດຈະຂ້າຕົວຕາຍໂດຍການແຂວນຄໍເທິງຕົ້ນໄມ້ ຊຶ່ງເປັນເຫດໃຫ້ສິບຕຳລຶງມາທ້ອງແຕກກະຈາຍໃນທົ່ງນາຊຶ່ງພາຍຫຼັງຈະຖືກໃຊ້ເປັນທີ່ຝັງສົບຄົນຕ່າງບ້ານຕ່າງເມືອງ.

ຂໍ້ຄວາມເຫຼົ່ານີ້ເກີດຂຶ້ນແລະເປັນຈິງຕາມທີ່ຜູ້ປະກາດພຣະທຳຂຽນໄວ້ ພຣະເຢຊູຄຣິດໄທນາຊາເຣັດຈຶ່ງເປັນພຣະເມຊີອາ ພຣະຜູ້ຊ່ວຍໃຫ້ລອດພົ້ນຂອງໂລກໂດຍປາສະຈາກຂໍ້ສົງໄສໃດໆທັງໝົດ.

ເພງສັນລະເສີນ 22:6, 17-18, 16:10, 34:20; ເອຊາຢາ 50:6, ເສກາລີຢາ 12:10




ກິດຈະການ 8:36-39




ມັດທາຍ 16:24, ມາຣະໂກ 16:24; ກິດຈະການ 9:1-2


N ເອົາ! ເອົາໄປອີກຄົນ ພວກຮັກພຣະຄຣິດ
O ພວກເຮົາຮູ້ຢູ່ແລ້ວວ່າ ສິ່ງນີ້ຕ້ອງ ເກີດຂຶ້ນເມື່ອມາເປັນຄຣິສຕຽນ
P ນີ້ເປັນເພາະຟາຣີຊາຍຄົນທີ່ຊື່ ໂຊໂລ. ລາວມີແຕ່ຄວາມກຽດຊັງ ແລະຢາກຂ້າຢູ່ທຸກເວລາ
Q ແມ່ນແທ້. ເຮົາຕ້ອງອະທິຖານ ເພື່ອລາວ. ໃຫ້ພຣະເຈົ້າເຮັດໃຈທີ່ ແຂງກະດ້າງຂອງລາວໃຫ້ອ່ອນໂຍນ ລົງ ລາວຈະໄດ້ເບິ່ງເຫັນຄວາມຈິງ
R ລາວມີແຕ່ ຄວາມກຽດຊັງ
S ຈື່ໄດ້ບໍ່ວ່າ ກ່ອນນັ້ນເຮົາບາງ ຄົນກໍບໍ່ເຊື່ອວາງໃຈຄືກັນ
N ວ່າແນວໃດ ທ່ານໂຊໂລ. ຂ້ອຍ ວ່າທ່ານກວາດພວກນອກຮີດທີ່ເປັນ ສິດຂອງເຢຊູຖິ້ມຈົນເຢຣູຊາເລັມ ເກືອບຈະປອດຈາກພວກນີ້ແລ້ວ
O ຍັງດອກ. ຍິ່ງຂ້ອຍຈັບໃສ່ຄຸກ ຍິ່ງເພີ່ມ ຫຼາຍຂຶ້ນ. ພວກນີ້ກະຈັດກະຈາຍໄປຢູ່ຕາມເມືອງ ຕ່າງໆ. ໃນໂຮງທຳມະເທດສະໜາທີ່ເມືອງດາ ມັດສະກັດ ມີພວກນີ້ຢູ່ເຕັມໄປໝົດ
P ເຮົາຈະອອກໜັງສືອະນຸຍາດໃຫ້ ທ່ານຈັບກຸມພວກນັ້ນ. ທ່ານຖືໄປ ດາມັດສະກັດ ຈັບຕົວມາໄດ້ເລີຍ
Q ເຮົາຈະໄປ ດຽວນີ້ເລີຍ!
ໂຊໂລ ຖືວ່າເປັນໜ້າທີ່ຂອງຕົນທີ່ຕ້ອງປົກປ້ອງສາສະໜາແລະ ປະເທດຊາດຂອງຕົນຈາກຜູ້ເຊື່ອໃນສາສະໜາອື່ນ. ແຕ່ສິ່ງທີ່ ລົບກວນຈິດໃຈລາວຄືການທີ່ພວກຄຣິສຕຽນດຳລົງຢູ່ໃນຄວາມ ສະຫງົບແລະຄວາມເຊື່ອໝັ້ນຢ່າງທີ່ລາວບໍ່ເຄີຍໄດ້ຮູ້ຈັກ
ທັນໃດນັ້ນມີແສງເຈີດຈ້າຍິ່ງກວ່າ ແສງອາທິດສ່ອງມາຂ້າງໜ້າລາວ
ໂຊໂລ ໂຊໂລເອີຍ ເຈົ້າ ຂົ່ມເຫງເຮົາເຮັດຫຍັງ?
ມ້າທີ່ໂຊໂລຂີ່ຢູ່ຕົກໃຈຢ້ານຈົນສະບັດລາວ ຕົກລົງໄປເທິງຖະໜົນ ແລ້ວມັນກໍແລ່ນໜີໄປ
ທ່ານເອີຍ! ທ່ານແມ່ນໃຜ? ເປັນ ຫຍັງຈຶ່ງວ່າຂ້ອຍຂົ່ມເຫງທ່ານ?
ເຮົາຄືເຢຊູ ເມື່ອເຈົ້າ ລົງໂທດສາວົກຂອງເຮົາ ເຈົ້າກໍຂົ່ມເຫງເຮົາຄືກັນ
ພຣະອົງເຈົ້າຂ້າ ຈະຊົງ ໃຫ້ຂ້ອຍເຮັດຫຍັງ?
ລຸກຂຶ້ນ ເຂົ້າໄປໃນເມືອງ ແລ້ວຈະ ມີຄົນບອກໃຫ້ຮູ້ວ່າຕ້ອງເຮັດຫຍັງ

ກິດຈະການ 9:1-6




ກິດຈະການ 9:7-19




ກິດຈະການ 9:20-22, 10:1-27, 38-41




ກິດຈະການ 10:47, 14:34




ກິດຈະການ 14:18-20




ກິດຈະການ 14:19-20, 16:23-25; 2 ໂກຣິນໂທ 11:24-25




1 ໂກຣິນໂທ 10:14, 12:12-13; 2 ໂກຣິນໂທ 11:25; ຄາລາເຕຍ 2:6; ເອເຟໂຊ 2:19


ພຣະເຢຊູ ຊົງເຄີຍເຕືອນສາວົກ ໃນພຣະທຳມັດທາຍ 24:9-11 ວ່າ "ໃນເວລານັ້ນພວກເຂົາຈະມອບພວກທ່ານໄວ້ໃຫ້ທົນທຸກລຳບາກແລະຂ້າພວກທ່ານເສຍ ແລະປະຊາຊາດຕ່າງໆຈະກຽດຊັງພວກທ່ານເພາະຄວາມຮັກຂອງພວກທ່ານທີ່ມີຕໍ່ເຮົາ ຄາວນັ້ນຄົນເປັນຈຳນວນຫຼາຍຈະຖົດຖອຍໄປ ແລະທໍລະຍົດກັນແລະກັນ ທັງຈະກຽດຊັງຊຶ່ງກັນແລະກັນດ້ວຍ. ຜູ້ປະກາດພຣະທຳປອມຫຼາຍຄົນຈະເກີດມີຂຶ້ນແລະຫຼອກລວງຄົນເປັນຈຳນວນຫຼາຍໃຫ້ຫຼົງໄປ."
ເມື່ອຄົນທີ່ເຄີຍເຫັນພຣະຄຣິດແກ່ເຖົ້າລົງແລະຄຣິສຕະຈັກແຜ່ຂະຫຍາຍໄປທົ່ວອານາຈັກໂຣມ ຄົນໂຣມເລີ່ມຈັບກຸມຄົນຄຣິສຕຽນ ຂົ່ມເຫງ ແລະຂ້າ. ຖ້າຜູ້ເຊື່ອຄົນໃດບໍ່ຍອມປະຕິເສດພຣະຄຣິດ ຈະຖືກຈັບຕົວໄປໃຫ້ໂຕສິງແລະເສືອຈີກກິນໃນສະໜາມກິລາ ໂດຍມີຜູ້ຄົນນັ່ງເບິ່ງຢູ່ບ່ອນນັ່ງຊົມ
ພຣະເຢຊູເຈົ້າ ໂຜດຮັບຈິດວິນຍານຂ້ອຍໄປດ້ວຍ
ພຣະບິດາ ຍົກໂທດພວກເຂົາທີ່ເຮັດກັບພວກເຮົາຢ່າງນີ້ດ້ວຍ
ບາງເທື່ອຄົນຄຣິສຕຽນຖືກແທງຕາຍດ້ວຍນ້ຳມືຂອງພວກນັກຮົບຊາວໂຣມ ທີ່ເອີ້ນວ່າກາດິເອເຕີ. ຜູ້ຄົນພາກັນປະຫຼາດໃຈທີ່ເຫັນຜູ້ເຊື່ອຢຶດໝັ້ນໃນຄວາມເຊື່ອຂອງຕົນແລະຍອມຕາຍເພື່ອພຣະເຢຊູ
ສ່ຽວສີ ແລ້ວພົບກັນເທິງສະຫວັນເດີ!
ຢ່າ...!

ມັດທາຍ 24:9-11




ມັດທາຍ 24:2; ລູກາ 19:43-44




ມັດທາຍ 14:10; ໂຢຮັນ 21:18




1 ເທຊະໂລນິກ 14:4, 4:16-17;  2 ເທຊະໂລນິກ 2:3-4;  ພຣະນິມິດ 1:9, 11, 8:1-13, 9:18, 13:16, 20:4


ຂ່າວປະເສີດເລື້ອງພຣະເຢຊູຄຣິດ ໄດ້ຮັບການ
ເທດສະໜາເປັນເວລາ 2000 ກ່ວາປີມາ
ແລ້ວ. ພຣະເຢຊູ ຊົງທຳນວາຍໄວ້ວ່າ ຂ່າວ
ປະເສີດເລື້ອງແຜ່ນດິນພຣະອົງຈະເຜີຍແຜ່ໄປ
ທົ່ວໂລກ ຈົນກວ່າທຸກຊາດ ທຸກເຜົ່າພັນ ທຸກ
ຄົວເຮືອນຈະໄດ້ຍິນທົ່ວເຖິງກັນ
ມີພຣະເຈົ້າພຽງໜຶ່ງດຽວ. ຜູ້ຊົງມີພຣະບຸດອົງ
ດຽວ. ມີຄວາມເຊື່ອດຽວ. ມີພຣະຄຳພີໜຶ່ງ
ດຽວ. ມີທາງດຽວເທົ່ານັ້ນທີ່ຈະນຳໄປສູ່
ສະຫວັນພາຍຫຼັງຊີວິດນີ້ສິ້ນສຸດລົງ ແລະພຣະ
ເຢຊູຊົງເປັນທາງນັ້ນ ເປັນຄວາມຈິງ ເປັນ
ຊີວິດ ເຫຼົ່ານີ້ຄືສິ່ງທີ່ຄົນຫຼວງຫຼາຍໄດ້ພົບແລ້ວ


ຂ່າວປະເສີດຂອງພຣະຄຣິດ ຕ່າງຈາກສາສະໜາອື່ນໃດ
ໃນໂລກບ່ອນທີ່ຂ່າວນີ້ເຜີຍແຜ່ໄປບໍ່ແມ່ນໂດຍການບັງຄັບ
ຂູ່ເຂັນ. ກົງກັນຂ້າມພຣະເຢຊູ ຊົງສອນໃຫ້ສິດຂອງພຣະ
ອົງຮັກສັດຕູແລະດຳເນີນຊີວິດດ້ວຍຄວາມປິຕິຍິນດີແລະ
ການຮ້ອງເພງ. ທຸກວັນນີ້ຜູ້ຄົນທຸກເຊື້ອຊາດ ທຸກພາສາມີ
ຄວາມສຸກທີ່ຮັບການອະໄພແລະໄດ້ຮັບຊີວິດນິລັນດອນ
ຢ່າງໃດກໍຕາມ ເຖິງວ່າພຣະເຢຊູ ຈະຊົງເປັນຄືນມາຈາກຄວາມຕາຍ
ມາຫຼາຍກວ່າ 2,000 ປີແລ້ວ ແຕ່ກໍຍັງຄົງມີຜູ້ທີ່ບໍ່ເຄີຍໄດ້ຍິນເລື່ອງ
ລາວນີ້ຢູ່ໃນໂລກ ຈຶ່ງຍັງຄົງຕ້ອງມີຜູ້ຖ່າຍທອດຂ່າວປະເສີດນີ້ຕໍ່ໄປ

ໂຢຮັນ 3:16, 14:6


ໃນປີ 1999 ຄຣິສຕຽນບາງຄົນທີ່ຫ່ວງໃຍຄົນ ທີ່ຍັງບໍ່ເຄີຍໄດ້ຍິນໄດ້ຟັງຂ່າວດີນີ້ ໄດ້ມາ ລວມຕົວກັນເວົ້າລົມກັນວ່າຈະເຮັດໃຫ້ຄົນ ຫຼວງຫຼາຍມາຮັບຮູ້ຂ່າວປະເສີດນີ້ໄດ້ຢ່າງໃດ?
ພວກເພິ່ນຕົກລົງກັນວ່າວິທີທີ່ດີທີ່ສຸດຄື ເຮັດໜັງສືທີ່ ມີພາບປະກອບເລົ່າເລື່ອງໃຫ້ຄົນທັງຫຼາຍເຂົ້າໃຈດີ.
ຫຼັງຈາກຂຽນເນື້ອຫາສຳເລັດ ພວກເພິ່ນກໍຮູ້ຈັກ ກັບ ແດນນີ ບູລານາດີ ນັກຂຽນກາຕູນຊັ້ນນຳ ຄົນໜຶ່ງຂອງໂລກ ຈຶ່ງຕິດຕໍ່ຂໍໃຫ້ວາດພາບໃຫ້.
ໃຊ້ເວລາທັງໝົດບໍ່ຕ່ຳກວ່າ 7 ປີ ກວ່າຈະເປັນໜັງສືເຫຼັ້ມນີ້ຂຶ້ນມາ.
ໜັງສືເຫຼັ້ມນີ້ໄດ້ຮັບການແປເຜີຍແຜ່ເປັນພາສາ ຕ່າງໆຫຼວງຫຼາຍໄປທົ່ວໂລກ. ກຸ່ມຄຣິສຕຽນທີ່ ຫ່ວງໃຍພີ່ນ້ອງຮັບຜິດຊອບຄ່າໃຊ້ຈ່າຍ.
ພີ່ນ້ອງຄຣິສຕຽນໃຊ້ເງິນແລະເວລາສ່ວນຕົວນຳໜັງສືນີ້ໄປ ມອບໃຫ້ກັບຄົນທີ່ຍັງບໍ່ເຄີຍຮູ້ຈັກຂ່າວດີເລື່ອງພຣະເຢຊູ.
ສະບາຍດີ ຂ້ອຍເອົາໜັງສືມາໃຫ້. ໜັງສືເຫຼັ້ມນີ້ຈະບອກໃຫ້ເຮົາຮູ້ເຖິງວິທີ ທີ່ຈະເຮັດໃຫ້ບາບກຳທັງຫຼາຍຂອງ ເຮົາພົ້ນໄປຈາກຕົວເຮົາ.
ບໍ່ມີເງິນຊື້ດອກ.
ຂ້ອຍບໍ່ເອົາເງິນ! ໃຫ້ເປັນ ຂອງຂວັນສຳລັບເຈົ້າ!
ວັນຕໍ່ມາ
ເປັນຫຍັງຈຶ່ງ ຈະໃຫ້ລ້າໆ?
ຂ້ອຍຮັກເຈົ້າ ຖືວ່າເຈົ້າເປັນ ພີ່ນ້ອງຂ້ອຍ. ໜັງສືເຫຼັ້ມນີ້ມີ ຂ່າວດີຫຼາຍສົມຄວນ.
ຖ້າຈັ່ງຊັ້ນຈະລອງອ່ານເບິ່ງວ່າ ໂລກນີ້ຈະຍັງມີຫຍັງດີໆເຫຼືອຢູ່ອີກຫຼື.
ສາສະໜາທີ່ເຮົານັບຖືບໍ່ຄ່ອຍ ເຄີຍສອນອັນໃດຢ່າງນີ້. ເລື່ອງ ຄວາມຮັກກັບການໃຫ້ອະໄພ.
**ເປັນເລື່ອງຈິງແທ້ໆ!**
=ຮົາຍອມຮັບວ່າເຮົາໄດ້ເຮັດບາບຕໍ່ ພຣະເຈົ້າ ແຕ່ພຣະອົງຊົງສົ່ງລູກມາ ຕາຍຊົດໃຊ້ຄວາມຜິດບາບທັງຫຼາຍ ຂອງເຮົາ. ອັດສະຈັນແທ້ໆ!=

ໂຢຮັນ 3:16




ໂຣມ 3:23, 6:23, 10:9




ກິດຈະການຂອງອັກຄະສາວົກ 19:2-5; ໂຣມ 6:2-4




**ກິດຈະການຂອງອັກຄະສາວົກ 8:37; 4:10-12; ໂຣມ 10:9**




ໂຢຮັນ 15:20; ມັດທາຍ 5:11-12


ພວກເຮົາຕ້ອງຮີບໜີ! ຕຶກກຳລັງຈະ ຖະຫຼົ່ມລົງມາ!
ລາອູນ ຊ່ວຍດຶງພວກພີ່ນ້ອງ ອອກຈາກແປວໄຟທີ່ລຸກໄໝ້.
ຂະນະທີ່ກຳລັງຈະກັບເຂົ້າໄປ ຊ່ວຍຄົນອື່ນໆຕິດຢູ່ໃນໄຟ...
ຕຶກຖະຫຼົ່ມທັບທັງຄູ່ເລີຍ!
ລາວຕາຍເພາະປະຕິບັດໜ້າທີ່ທາງ ສາສະໜາຂອງພວກເຮົາ. ຕ້ອງຈັບ ຕົວພວກຄຣິສຕຽນມາລົງໂທດ.
ພວກເຂົານຳສົບນັກບວດໄປຝັງດ້ວຍຄວາມ ໂສກເສົ້າແລະຢ້ານກົວເພາະບໍ່ຮູ້ວ່າຕາຍແລ້ວຈະ ໄປໃສ. ບໍ່ມີຄວາມຫວັງເລື່ອງຊີວິດນິລັນດອນ.
ລາອູນສະຫຼະຊີວິດເພື່ອໝູ່ເພື່ອນ. ບໍ່ມີຄວາມຮັກໃດຍິ່ງໃຫຍ່ໄປກວ່ານີ້ແລ້ວ.
ແມ່ເອີຍ ຢ່າເສຍໃຈໄປເລີຍ. ພໍ່ໄປຢູ່ກັບພຣະເຢຊູແລ້ວລະ.

ໂຢຮັນ 15:13




ມັດທາຍ 25:30, 7:21-27, 25:21; 1 ໂກລິນໂທ 6:9-11; ຢາໂກໂບ 4:11-17